| ຊື່ນະໂຍບາຍ<br>**Medical Financial Assistance (ການຊ່ວຍເຫຼືອດ້ານການເງິນທາງການແພດ)** | ໝາຍເລກນະໂຍບາຍ<br>**NATL.CB.307** |
|---|---|
| ພະແນກຮັບຜິດຊອບ<br>**National Community Health** | ວັນທີມີປະຜົນບັງຄັບໃຊ້<br>**1 ມັງກອນ 2024** |
| ເຈົ້າຂອງເອກະສານ<br>**ຜູ້ອຳນວຍການ, Medical Financial Assistance (ການຊ່ວຍເຫຼືອດ້ານການເງິນທາງການແພດ)** | ໜ້າ<br>**1 ຈາກ 46** |

## 1.0 ຖະແຫຼງການກ່ຽວກັບນະໂຍບາຍ

Kaiser Foundation Health Plans (KFHP) ແລະ Kaiser Foundation Hospitals (KFH) ມຸ່ງໝັ້ນທີ່ຈະໃຫ້ບັນດາໂຄງການທີ່ຊ່ວຍອຳນວຍຄວາມສະດວກໃນການເຂົ້າເຖິງການເບິ່ງແຍງດູແລປະຊາກອນທີ່ມີຄວາມບອບບາງ. ຄວາມມຸ່ງໝັ້ນນີ້ລວມທັງການໃຫ້ການຊ່ວຍເຫຼືອທາງດ້ານການເງິນໃຫ້ແກ່ບັນດາຄົນເຈັບທີ່ມີລາຍຮັບຕ່ຳ ທີ່ບໍ່ມີປະກັນໄພ ແລະ ມີປະກັນໄພມູນຄ່າຕ່ຳ ໃນເວລາທີ່ຄວາມສາມາດໃນການຈ່າຍຄ່າບໍລິການກາຍເປັນອຸປະສັກຕໍ່ການເຂົ້າເຖິງການດູແລສຸກເສີນ ແລະ ການດູແລທີ່ຈຳເປັນທາງການແພດ.

## 2.0 ຈຸດປະສົງ

ນະໂຍບາຍນີ້ ອະທິບາຍ ບັນດາຂໍ້ກຳນົດຕ່າງໆ ສຳລັບການມີເງື່ອນໄຂໄດ້ຮັບ ແລະ ການໄດ້ຮັບການຊ່ວຍເຫຼືອທາງດ້ານການເງິນ ສຳລັບການບໍລິການສຸກເສີນ ແລະ ການບໍລິການທີ່ຈຳເປັນທາງການແພດ ໂດຍຜ່ານໂຄງການ Medical Financial Assistance (ການຊ່ວຍເຫຼືອດ້ານການເງິນທາງການແພດ, MFA). ຂໍ້ກຳນົດຕ່າງໆ ແມ່ນປະຕິບັດຕາມມາດຕາ 501(r) ຂອງ United States Internal Revenue Code (ປະມວນກົດໝາຍວ່າດ້ວຍລາຍຮັບພາຍໃນແຫ່ງສະຫະລັດ) ແລະ ລະບຽບການຕ່າງໆຂອງລັດທີ່ກ່ຽວຂ້ອງ ໃນການແກ້ໄຂການບໍລິການທີ່ມີສິດໄດ້ຮັບ, ວິທີການໃນການໄດ້ຮັບການເຂົ້າເຖິງ, ເກນການມີສິດໄດ້ຮັບໂຄງການ, ໂຄງສ້າງລາງວັນ MFA, ພື້ນຖານການຄິດໄລ່ຈຳນວນລາງວັນ ແລະ ການດຳເນີນການທີ່ອະນຸຍາດ ໃນກໍລະນີທີ່ບໍ່ຈ່າຍຄ່າໃບບິນຄ່າທາງການແພດ.

## 3.0 ຂອບເຂດ

ນະໂຍບາຍນີ້ ມີຜົນບັງຄັບໃຊ້ກັບບັນດາພະນັກງານທີ່ໄດ້ຮັບການວ່າຈ້າງໂດຍບັນດາບໍລິສັດດັ່ງຕໍ່ໄປນີ້ ແລະ ບັນດາບໍລິສັດໃນເຄືອຂອງເຂົາເຈົ້າ (ເຊິ່ງເອີ້ນລວມກັນວ່າ "KFHP/H"):

Proprietary Information. Kaiser Permanente. All rights reserved.
Publication, duplication, disclosure or use for any purpose not expressly authorized in writing is prohibited.
**Printed copies are for reference only. Please see electronic copy for latest approved version.**

**3.1** Kaiser Foundation Health Plan, Inc. (KFHP);

**3.2** Kaiser Foundation Hospitals (KFH) ແລະ

**3.3** ບັນດາບໍລິສັດໃນເຄືອຂອງ KFHP/H.

**3.4** ນະໂຍບາຍນີ້ ມີຜົນບັງຄັບໃຊ້ກັບໂຮງໝໍ Kaiser Foundation Hospitals ແລະ ຄລີນິກໃນເຄືອຂອງໂຮງໝໍ ທີ່ໄດ້ລະບຸໄວ້ໃນ *ພາກພະໜວກ ສໍາລັບ ພາກພື້ນຕ່າງໆຂອງ Kaiser Permanente, ເອກະສານຄັດຕິດ 1-8.*

## 4.0 ນິຍາມຄໍາສັບ

ເບິ່ງ*ເອກະສານຊ້ອນທ້າຍ A – ປະມວນຄໍາສັບ.*

## 5.0 ຂໍ້ກໍານົດຕ່າງໆ

KFHP/H ຮັກສາໂຄງການ MFA ທີ່ໄດ້ຜ່ານການທົດສອບແບບສະເລ່ຍແລ້ວ ເພື່ອບັນເທົາອຸປະສັກທາງການເງິນໃນການໄດ້ຮັບການດູແລສຸກເສີນ ແລະ ການດູແລທີ່ຈໍາເປັນທາງການແພດ ສໍາລັບຄົນເຈັບທີ່ມີສິດໄດ້ຮັບ ໂດຍບໍ່ຄໍານຶງເຖິງອາຍຸ, ຄວາມພິການ, ເພດ, ເຊື້ອຊາດ, ຄວາມນັບຖືສາສະໜາ ຫຼື ສະຖານະຄົນເຂົ້າເມືອງ, ລົດນິຍົມທາງເພດ, ຊາດກໍາເນີດ ຂອງຄົນເຈັບ ແລະ ບໍ່ວ່າຄົນເຈັບຈະມີການຄຸ້ມຄອງສຸຂະພາບ ຫຼື ບໍ່ ກໍຕາມ.

### 5.1 ການບໍລິການຕ່າງໆ ທີ່ມີສິດໄດ້ຮັບ ແລະ ບໍ່ມີສິດໄດ້ຮັບ ພາຍໃຕ້ນະໂຍບາຍ MFA

**5.1.1 ການບໍລິການຕ່າງໆ ທີ່ມີສິດໄດ້ຮັບ.** MFA ອາດຈະມີຜົນບັງຄັບໃຊ້ກັບ (1) ການບໍລິການການເບິ່ງແຍງດູແລສຸຂະພາບທີ່ຈໍາເປັນທາງການແພດບາງປະການ, ລວມທັງການເບິ່ງແຍງດູແລສຸກເສີນ; (2) ການບໍລິການຮ້ານຂາຍຢາ ແລະ ຜະລິດຕະພັນຕ່າງໆ; ແລະ (3) ການສະໜອງອຸປະກອນການແພດທີ່ສະໜອງໃຫ້ຢູ່ສະຖານປິ່ນປົວແຫ່ງຕ່າງໆຂອງ Kaiser Permanente (KP)

Proprietary Information. Kaiser Permanente. All rights reserved.
Publication, duplication, disclosure or use for any purpose not expressly authorized in writing is prohibited.
**Printed copies are for reference only. Please see electronic copy for latest approved version.**

(ເຊັ່ນ: ໂຮງໝໍ, ຄລີນິກໃນເຄືອໂຮງໝໍ, ສູນການແພດ ແລະ ອາຄານຫ້ອງການການແພດ), ຢູ່ທີ່ສະຖານຄົນເຈັບນອກ KFHP/H, ການສັ່ງຊື້ທາງໄປສະນີ ແລະ ຮ້ານຂາຍຢາພິເສດ ຫຼື ໂດຍຜູ້ໃຫ້ບໍລິການ KP, ດັ່ງທີ່ອະທິບາຍໄວ້ຂ້າງລຸ່ມນີ້:

**5.1.1.1 ການບໍລິການທີ່ຈຳເປັນທາງການແພດ.** ການເບິ່ງແຍງດູແລ, ການປິ່ນປົວ ຫຼື ການບໍລິການທີ່ສັ່ງ ຫຼື ສະໜອງໃຫ້ໂດຍຜູ້ໃຫ້ບໍລິການຂອງ KP ທີ່ຈຳເປັນສຳລັບການປ້ອງກັນ, ການປະເມີນຜົນ, ການບົ່ງມະຕິພະຍາດ ຫຼື ການປິ່ນປົວສະພາວະທາງການແພດ ແລະ ບໍ່ແມ່ນເພື່ອຄວາມສະດວກຂອງຄົນເຈັບ ຫຼື ຜູ້ໃຫ້ບໍລິການເບິ່ງແຍງດູແລດ້ານການແພດເປັນຫຼັກ.

**5.1.1.2 ໃບສັ່ງແພດ ແລະ ອຸປະກອນການຢາ.** ໃບສັ່ງແພດທີ່ຍື່ນຢູ່ຮ້ານຂາຍຢາ KFHP/H ແລະ ຂຽນໂດຍຜູ້ໃຫ້ບໍລິການຂອງ KP ແລະ ຜູ້ໃຫ້ບໍລິການທີ່ມີສັນຍາ, ພະແນກສຸກເສີນທີ່ບໍ່ແມ່ນ KP ແລະ ຜູ້ໃຫ້ບໍລິການເບິ່ງແຍງດູແລຮີບດ່ວນ, ແພດປິ່ນປົວແຂ້ວ (DMD) ແລະ ແພດຜ່າຕັດແຂ້ວ (DDS).

**5.1.1.2.1 ຢາສາມັນ.** ການນຳໃຊ້ຢາສາມັນແມ່ນເປັນສິ່ງທີ່ຂໍແນະນຳ, ເມື່ອໃດກໍ່ຕາມທີ່ເປັນໄປໄດ້.

**5.1.1.2.2 ຢາມີຍີ່ຫໍ້.** ຢາມີຍີ່ຫໍ້ທີ່ສັ່ງໂດຍຜູ້ໃຫ້ບໍລິການຂອງ KP ແມ່ນມີສິດໄດ້ຮັບ ເມື່ອ:

**5.1.1.2.2.1** ມີການລະບຸຄຳວ່າ "ແຈກຈ່າຍຕາມທີ່ຂຽນ" (DAW) ໄວ້ໃນໃບສັ່ງຢາ ຫຼື

**5.1.1.2.2.2** ບໍ່ມີຢາສາມັນທີ່ມີສັບພະຄຸນທຽບເທົ່າ.

Proprietary Information. Kaiser Permanente. All rights reserved.
Publication, duplication, disclosure or use for any purpose not expressly authorized in writing is prohibited.
**Printed copies are for reference only. Please see electronic copy for latest approved version.**

**5.1.1.2.3 ຢາ ຫຼື ອຸປະກອນການຢາທີ່ຫາຊື້ໄດ້ຕາມຮ້ານຂາຍຢາທົ່ວໄປ.** ຜະລິດຕະພັນເຫຼົ່ານີ້ ແມ່ນມີສິດໄດ້ຮັບເມື່ອ:

**5.1.1.2.3.1** ຜູ້ໃຫ້ບໍລິການຂອງ KP ເປັນຜູ້ຂຽນໃບສັ່ງຢາ ຫຼື ຄຳສັ່ງຊື້;

**5.1.1.2.3.2** ລາຍການດັ່ງກ່າວ ແມ່ນເບີກຈ່າຍຈາກຮ້ານຂາຍຢາຂອງ KP ແລະ

**5.1.1.2.3.3** ລາຍການດັ່ງກ່າວ ແມ່ນມີເປັນປະຈຳຢູ່ໃນຮ້ານຂາຍຢາຂອງ KP.

**5.1.1.2.4 ຜູ້ໄດ້ຮັບສິດທິປະໂຫຍດ Medicare.** ມີຜົນບັງຄັບໃຊ້ກັບຜູ້ໄດ້ຮັບສິດທິປະໂຫຍດ Medicare ສຳລັບຢາຕາມໃບສັ່ງແພດທີ່ໄດ້ຮັບການຄຸ້ມຄອງພາຍໃຕ້ Medicare ພາກ D ໃນຮູບແບບການຍົກເວັ້ນຮ້ານຂາຍຢາ.

**5.1.1.2.5 ຢາປິ່ນປົວແຂ້ວ.** ຢາປິ່ນປົວຄົນເຈັບນອກທີ່ສັ່ງໂດຍ DMD ຫຼື DDS ແມ່ນຖືກຍອມຮັບ ຖ້າຫາກວ່າຢານັ້ນ ແມ່ນມີຄວາມຈຳເປັນທາງການແພດສຳລັບການປິ່ນປົວການບໍລິການດ້ານທັນຕະກຳ.

**5.1.1.3 ອຸປະກອນການແພດທີ່ທົນທານ (DME).** DME ທີ່ກ່ຽວຂ້ອງ ແມ່ນຈຳກັດສະເພາະອຸປະກອນທີ່ມີເປັນປົກກະຕິຈາກບັນດາສະຖານປິ່ນປົວຂອງ KP ແລະ ສະໜອງໃຫ້ໂດຍ KFHP/H ໃຫ້ແກ່ຄົນເຈັບທີ່ບັນລຸໄດ້ຕາມເກນວ່າດ້ວຍຄວາມຈຳເປັນທາງການແພດ.

Proprietary Information. Kaiser Permanente. All rights reserved.
Publication, duplication, disclosure or use for any purpose not expressly authorized in writing is prohibited.
**Printed copies are for reference only. Please see electronic copy for latest approved version.**

DME ຕ້ອງໄດ້ຮັບການສັ່ງຊື້ໂດຍຜູ້ໃຫ້ບໍລິການຂອງ KP ຕາມຄຳແນະນຳຂອງ DME.

**5.1.1.4 ການບໍລິການທີ່ Medicaid ປະຕິເສດ.** ການບໍລິການທາງການແພດ, ໃບສັ່ງແພດ, ອຸປະກອນການຢາ ແລະ DME ທີ່ບໍ່ໄດ້ຮັບການຄຸ້ມຄອງໂດຍໂຄງການ Medicaid ຂອງລັດ, ແຕ່ຖືກກຳນົດວ່າມີຄວາມຈຳເປັນທາງການແພດ ແລະ ໄດ້ຮັບການສັ່ງໂດຍຜູ້ໃຫ້ບໍລິການຂອງ KP (ເຊັ່ນ: ການຜ່າຕັດຫັນງຫຸ້ມອະໄວຍະວະເພດຊາຍເດັກເກີດໃໝ່, ການບໍລິການໂລກໄສ້ເລື່ອນ, ທາດປະສົມທາງການຢາ, ຢາປິ່ນປົວອາການຕ່າງໆ ແລະ ອື່ນໆ).

**5.1.1.5 ຫ້ອງຮຽນຮູ້ດ້ານສຸຂະພາບ.** ຫ້ອງຮຽນທີ່ມີຢູ່ ທີ່ກຳນົດເວລາ ແລະ ຈັດໃຫ້ໂດຍ KP ທີ່ໄດ້ຮັບການແນະນຳຈາກຜູ້ໃຫ້ບໍລິການຂອງ KP ໃນນາມເປັນສ່ວນໜຶ່ງຂອງແຜນການເບິ່ງແຍງດູແລຂອງຄົນເຈັບ.

**5.1.1.6 ການບໍລິການທີ່ມີໃຫ້ບົນພື້ນຖານຂໍ້ຍົກເວັ້ນ.** ໃນບາງສະຖານະການພິເສດ, MFA ອາດຈະມີຜົນບັງຄັບໃຊ້ໃນການເລືອກການບໍລິການ ແລະ ເຄື່ອງໃຊ້ທີ່ຈຳເປັນ ເພື່ອອຳນວຍຄວາມສະດວກໃນການປ່ອຍຄົນເຈັບໃນອອກຈາກຈາກໂຮງໝໍ ທີ່ບັນລຸໄດ້ຕາມເກນການມີສິດໄດ້ຮັບຄ່າປິ່ນປົວທາງການແພດລະດັບສູງ ທີ່ໄດ້ອະທິບາຍໄວ້ຂ້າງລຸ່ມນີ້, ເບິ່ງຂໍ້ 5.6.2. ຖ້າຄົນເຈັບບັນລຸໄດ້ຕາມເກນ, ການບໍລິການທີ່ໄດ້ຮັບການຄຸ້ມຄອງ ອາດຈະລວມທັງການພະຍາບານທີ່ມີຄວາມຊຳນິຊຳນານ, ການເບິ່ງແຍງດູແລລະດັບປານກາງ ແລະ ການບໍລິການດູແລທີ່ສະໜອງໃຫ້ຢູ່ໃນສະຖານປິ່ນປົວທີ່ບໍ່

Proprietary Information. Kaiser Permanente. All rights reserved.
Publication, duplication, disclosure or use for any purpose not expressly authorized in writing is prohibited.
**Printed copies are for reference only. Please see electronic copy for latest approved version.**

ແມ່ນຂອງ KP. ການສະໜອງອາດຈະລວມທັງ DME ທີ່ຂຽນໃບສັ່ງ ຫຼື ສັ່ງຊື້ໂດຍຜູ້ໃຫ້ບໍລິການຂອງ KP ແລະ ສະໜອງໂດຍຄູ່ສັນຍາ/ຜູ້ຂາຍ ຕາມທີ່ໄດ້ອະທິບາຍໄວ້ຂ້າງລຸ່ມນີ້.

**5.1.1.6.1 ການບໍລິການກຸ່ມພະຍາບານທີ່ມີຄວາມຊໍານິຊໍານານ, ການເບິ່ງແຍງດູແລລະດັບປານກາງ ແລະ ການບໍລິການຄອບຄຸມດູແລ.** ສະໜອງໃຫ້ໂດຍສະຖານປິ່ນປົວຂອງ KP ທີ່ມີສັນຍາ ໃຫ້ແກ່ຄົນເຈັບທີ່ມີຄວາມຕ້ອງການທາງການແພດຕາມໃບສັ່ງແພດ ເພື່ອອໍານວຍຄວາມສະດວກໃຫ້ແກ່ການປ່ອຍຄົນເຈັບໃນອອກຈາກໂຮງໝໍ.

**5.1.1.6.2 ອຸປະກອນການແພດທີ່ທົນທານ (DME).** DME ທີ່ສະໜອງໃຫ້ໂດຍຜູ້ຂາຍ ທີ່ສັ່ງຊື້ໂດຍຜູ້ໃຫ້ບໍລິການຂອງ KP ຕາມຄໍາແນະນໍາຂອງ DME ແລະ ສະໜອງໃຫ້ໂດຍຜູ້ຂາຍທີ່ມີສັນຍາ ຜ່ານພະແນກ DME ຂອງ KFHP/H.

**5.1.2 ການບໍລິການຕ່າງໆ ທີ່ບໍ່ມີສິດໄດ້ຮັບ.** MFA ອາດຈະບໍ່ມີຜົນບັງຄັບໃຊ້ກັບ:

**5.1.2.1 ການບໍລິການຕ່າງໆ ທີ່ບໍ່ຖືວ່າເປັນກໍລະນີສຸກເສີນ ຫຼື ມີຄວາມຈໍາເປັນທາງການແພດ ຕາມການກໍານົດໂດຍຜູ້ໃຫ້ບໍລິການຂອງ KP.** ຕໍ່ໄປນີ້ແມ່ນບັນຊີລາຍຊື່ຕົວຢ່າງຂອງການບໍລິການທີ່ບໍ່ແມ່ນກໍລະນີສຸກເສີນ ຫຼື ບໍ່ມີຄວາມຈໍາເປັນທາງການແພດ ໂດຍສັງເຂບ:

**5.1.2.1.1** ການຜ່າຕັດ ຫຼື ການບໍລິການເພື່ອຄວາມສວຍງາມ,

Proprietary Information. Kaiser Permanente. All rights reserved.
Publication, duplication, disclosure or use for any purpose not expressly authorized in writing is prohibited.
**Printed copies are for reference only. Please see electronic copy for latest approved version.**

ລວມທັງການບໍລິການດ້ານຜິວໜັງທີ່ມີຈຸດປະສົງຕົ້ນຕໍໃນການປັບປຸງຮູບໂສມຂອງຄົນເຈັບ.

**5.1.2.1.2** ການປິ່ນປົວພາວະມີບຸດຍາກ ແລະ ການບໍລິການທີ່ກ່ຽວຂ້ອງ ລວມທັງການບົ່ງມະຕິພະຍາດ.

**5.1.2.1.3** ອຸປະກອນການແພດແບບຂາຍຍ່ອຍ.

**5.1.2.1.4** ການບໍາບັດທາງເລືອກ, ລວມທັງ ການຝັງເຂັມ, ການນວດຈັດກະດູກ ແລະ ການບໍລິການນວດ.

**5.1.2.1.5** ການສັກຢາ ແລະ ອຸປະກອນການປິ່ນປົວພາວະຜິດປົກກະຕິທາງເພດສໍາພັນ.

**5.1.2.1.6** ການບໍລິການຖືພາແທນ.

**5.1.2.1.7** ການບໍລິການທີ່ກ່ຽວຂ້ອງກັບຄວາມຮັບຜິດຊອບຂອງບຸກຄົນທີສາມ, ການຄຸ້ມຄອງປະກັນໄພສ່ວນບຸກຄົນ ຫຼື ກໍລະນີການຊົດເຊີຍພະນັກງານ.

**5.1.2.1.8** **ການບໍລິການສໍາລັບຄົນເຈັບທີ່ມີປະກັນໄພສຸຂະພາບທີ່ບໍ່ແມ່ນ KP.** ການບໍລິການທີ່ບໍ່ສຸກເສີນ ຫຼື ບໍ່ຮີບດ່ວນ ແລະ ອຸປະກອນການຢາ ສໍາລັບຄົນເຈັບນອກ ທີ່ໄດ້ຮັບການຄຸ້ມຄອງພາຍໃຕ້ການຄຸ້ມຄອງສຸຂະພາບທີ່ບໍ່ແມ່ນ KP ຂອງຄົນເຈັບ ທີ່ຮຽກຮ້ອງໃຫ້ຄົນເຈັບນໍາຕ້ອງໄດ້ໃຊ້ເຄືອຂ່າຍຜູ້ໃຫ້ບໍລິການ ແລະ ຮ້ານຂາຍຢາທີ່ບໍ່ແມ່ນ KP ທີ່ຂໍແນະນໍາ ທີ່ລະບຸໄວ້.

**5.1.2.2 ໃບສັ່ງແພດ ແລະ ອຸປະກອນການຢາ ທີ່ບໍ່ຖືວ່າເປັນກໍລະນີສຸກເສີນ ຫຼື ຈໍາເປັນທາງການແພດ.**

Proprietary Information. Kaiser Permanente. All rights reserved.
Publication, duplication, disclosure or use for any purpose not expressly authorized in writing is prohibited.
**Printed copies are for reference only. Please see electronic copy for latest approved version.**

ໃບສັ່ງແພດ ແລະ ອຸປະກອນການຢາ ທີ່ບໍ່ຖືວ່າເປັນກໍລະນີສຸກເສີນ ຫຼື ຈໍາເປັນທາງການແພດ ແມ່ນລວມທັງ, ແຕ່ບໍ່ຈໍາກັດພຽງແຕ່:

**5.1.2.2.1** ຢາຕ່າງໆທີ່ບໍ່ໄດ້ຮັບການອະນຸມັດຈາກ Pharmacy and Therapeutics Committee (ຄະນະກໍາມະການ ການຢາ ແລະ ການບໍາບັດ).

**5.1.2.2.2** ຢາ ແລະ ອຸປະກອນທີ່ຫາຊື້ໄດ້ຕາມຮ້ານຂາຍຢາທົ່ວໄປ ທີ່ບໍ່ໄດ້ຮັບການຂຽນໃບສັ່ງ ຫຼື ສັ່ງຊື້ໂດຍຜູ້ໃຫ້ບໍລິການຂອງ KP.

**5.1.2.2.3** ຢາ ແລະ ອຸປະກອນທີ່ຫາຊື້ໄດ້ຕາມຮ້ານຂາຍຢາທົ່ວໄປ ທີ່ບໍ່ມີຢູ່ເປັນປົກກະຕິໃນຮ້ານຂາຍຢາຂອງ KP ແລະ ຕ້ອງໄດ້ສັ່ງຊື້ເປັນພິເສດ.

**5.1.2.2.4** ໃບສັ່ງແພດທີ່ກ່ຽວຂ້ອງກັບຄວາມຮັບຜິດຊອບຂອງບຸກຄົນທີສາມ, ການຄຸ້ມຄອງປະກັນໄພສ່ວນບຸກຄົນ ຫຼື ກໍລະນີການຊົດເຊີຍພະນັກງານ.

**5.1.2.2.5** ຢາທີ່ໄດ້ຮັບການຍົກເວັ້ນພິເສດ (ເຊັ່ນ: ການຈະເລີນພັນ, ເຄື່ອງສໍາອາງ, ຄວາມຜິດປົກກະຕິທາງເພດ).

**5.1.2.3 ໃບສັ່ງແພດສໍາລັບຜູ້ລົງທະບຽນເຂົ້າ Medicare ພາກ D ທີ່ມີສິດໄດ້ຮັບ ຫຼື ໄດ້ລົງທະບຽນເຂົ້າໃນໂຄງການ Low Income Subsidy (ເງິນອຸດໜູນຜູ້ມີລາຍໄດ້ຕໍ່າ, LIS).** ສ່ວນແບ່ງຄ່າໃຊ້ຈ່າຍທີ່ຍັງເຫຼືອ ສໍາລັບຢາຕາມໃບສັ່ງແພດ ສໍາລັບຜູ້ລົງທະບຽນເຂົ້າໃນ Medicare Advantage ພາກ D ທີ່ມີສິດໄດ້ຮັບ ຫຼື ໄດ້ລົງທະບຽນເຂົ້າໃນໂຄງການ LIS, ຕາມຄໍາແນະນໍາຂອງສູນບໍລິການ Medicare ແລະ Medicaid (CMS).

Proprietary Information. Kaiser Permanente. All rights reserved.
Publication, duplication, disclosure or use for any purpose not expressly authorized in writing is prohibited.
**Printed copies are for reference only. Please see electronic copy for latest approved version.**

**5.1.2.4 ການບໍລິການທີ່ສະໜອງໃຫ້ນອກສະຖານປິ່ນປົວຂອງ KP.** ນະໂຍບາຍ MFA ມີຜົນບັງຄັບໃຊ້ກັບການບໍລິການທີ່ສະໜອງໃຫ້ຢູ່ສະຖານປິ່ນປົວຂອງ KP ຫຼື ໂດຍຜູ້ໃຫ້ບໍລິການຂອງ KP ເທົ່ານັ້ນ.

**5.1.2.4.1** ເຖິງແມ່ນວ່າຈະມີການສົ່ງຈາກຜູ້ໃຫ້ບໍລິການຂອງ KP ກໍຕາມ, ການບໍລິການອື່ນໆທັງໝົດແມ່ນລ້ວນແຕ່ບໍ່ມີສິດໄດ້ຮັບ MFA.

**5.1.2.4.2** ການບໍລິການທີ່ສະໜອງໃຫ້ຢູ່ຫ້ອງການການແພດ, ສະຖານເບິ່ງແຍງດູແລຮີບດ່ວນ ແລະ ພະແນກສຸກເສີນ ທີ່ບໍ່ແມ່ນ KP, ພ້ອມທັງການບໍລິການສຸຂະພາບເຖິງບ້ານ, ສະຖານຮັບຮອງ, ການເບິ່ງແຍງດູແລພັກຟື້ນ ແລະ ການເບິ່ງແຍງດູແລແບບຄວບຄຸມ ທີ່ບໍ່ແມ່ນ KP ແມ່ນຖືກຍົກເວັ້ນ ເວັ້ນເສຍແຕ່ໄດ້ລະບຸວ່າເປັນຂໍ້ຍົກເວັ້ນຕາມຂໍ້ 5.1.1.6 ຂ້າງເທິງເທົ່ານັ້ນ.

**5.1.2.5 ອຸປະກອນການແພດທີ່ທົນທານ (DME).** DME ທີ່ສະໜອງໃຫ້ໂດຍຜູ້ຂາຍທີ່ມີສັນຍາແມ່ນຖືກຍົກເວັ້ນໂດຍບໍ່ຄຳນຶງເຖິງວ່າໄດ້ຮັບການສັ່ງຊື້ໂດຍຜູ້ໃຫ້ບໍລິການຂອງ KP ຫຼື ບໍ່ກໍຕາມ, ເວັ້ນເສຍແຕ່ ໄດ້ລະບຸວ່າເປັນຂໍ້ຍົກເວັ້ນຕາມຂໍ້ 5.1.1.6 ຂ້າງເທິງເທົ່ານັ້ນ.

**5.1.2.6 ການບໍລິການຂົນສົ່ງ ແລະ ຄ່າໃຊ້ຈ່າຍໃນການເດີນທາງ.** ໂຄງການ MFA ບໍ່ໄດ້ຊ່ວຍຄືນເຈັບຈ່າຍຄ່າຂົນສົ່ງສຸກເສີນ ຫຼື ບໍ່ສຸກເສີນ ຫຼື ຄ່າໃຊ້ຈ່າຍທີ່ກ່ຽວຂ້ອງກັບການເດີນທາງ (ເຊັ່ນ: ຄ່າພັກເຊົາ ແລະ ອາຫານ).

**5.1.2.7 ເບັ້ຍປະກັນໄພແຜນສຸຂະພາບ.** ໂຄງການ MFA ບໍ່ໄດ້ຊ່ວຍຄືນເຈັບຈ່າຍຄ່າໃຊ້ຈ່າຍທີ່ກ່ຽວຂ້ອງກັບການຄຸ້ມຄອງສຸຂະພາບ (ເຊັ່ນ: ຄ່າທຳນຽມ ຫຼື ເບັ້ຍປະກັນໄພ).

Proprietary Information. Kaiser Permanente. All rights reserved.
Publication, duplication, disclosure or use for any purpose not expressly authorized in writing is prohibited.
**Printed copies are for reference only. Please see electronic copy for latest approved version.**

**5.1.3** ຂໍ້ມູນເພີ່ມຕື່ມກ່ຽວກັບການບໍລິການ ແລະ ຜະລິດຕະພັນທີ່ມີສິດໄດ້ຮັບ ແລະ ບໍ່ມີສິດໄດ້ຮັບສະເພາະພາກພື້ນ ທີ່ມີຢູ່ໃນພາກຜະໜວກທີ່ກ່ຽວຂ້ອງ. ເບິ່ງ *ພາກຜະໜວກ ສຳລັບພື້ນທີ່ຕ່າງໆຂອງ Kaiser Permanente, ເອກະສານຄັດຕິດ 1-8.*

**5.2 ຜູ້ໃຫ້ບໍລິການ.** MFA ມີຜົນບັງຄັບໃຊ້ກັບການບໍລິການທີ່ມີສິດໄດ້ຮັບທີ່ສັ່ງມອບໃຫ້ໂດຍຜູ້ໃຫ້ບໍລິການດ້ານເບິ່ງແຍງດູແລທາງການແພດທີ່ນະໂຍບາຍ MFA ມີຜົນບັງຄັບໃຊ້. ເບິ່ງ *ພາກຜະໜວກ ສຳລັບພື້ນທີ່ຕ່າງໆຂອງ Kaiser Permanente, ເອກະສານຄັດຕິດ 1-8.*

**5.3 ແຫຼ່ງຂໍ້ມູນກ່ຽວກັບໂຄງການ ແລະ ວິທີການຍື່ນຄຳຮ້ອງຂໍ MFA.** ຂໍ້ມູນເພີ່ມຕື່ມກ່ຽວກັບໂຄງການ MFA ແລະ ວິທີການຍື່ນຄຳຮ້ອງຂໍແມ່ນໄດ້ສະຫຼຸບໄວ້ຢູ່ໃນພາກຜະໜວກທີ່ກ່ຽວຂ້ອງ. ເບິ່ງ *ພາກຜະໜວກ ສຳລັບພື້ນທີ່ຕ່າງໆຂອງ Kaiser Permanente, ເອກະສານຄັດຕິດ 1-8.*

**5.3.1 ແຫຼ່ງຂໍ້ມູນກ່ຽວກັບໂຄງການ.** ສຳເນົານະໂຍບາຍ MFA, ແບບຟອມຄຳຮ້ອງຂໍສະໝັກ, ຄຳແນະນຳ ແລະ ບົດສະຫຼຸບທີ່ເປັນພາສາທຳມະດາ (ເຊັ່ນ: ຂໍ້ສະຫຼຸບກ່ຽວກັບນະໂຍບາຍ ຫຼື ແຜ່ນພັບຂອງໂຄງການ) ແມ່ນມີໃຫ້ແກ່ສາທາລະນະໂດຍບໍ່ເສຍຄ່າໃຊ້ຈ່າຍ ຈາກເວັບໄຊຂອງ KFHP/H, ທາງອີເມວ, ແບບເຊິ່ງໜ້າ ຫຼື ທາງໄປສະນີແຫ່ງສະຫະລັດ.

**5.3.2 ການຍື່ນຄຳຮ້ອງຂໍ MFA.** ເພື່ອຍື່ນຄຳຮ້ອງຂໍໂຄງການ MFA, ຄົນເຈັບຈຳເປັນຕ້ອງໄດ້ສະແດງໃຫ້ເຫັນເຖິງຄວາມຕ້ອງການທັນທີທັນໃດທີ່ເກີດຈາກໃບບິນຮຽກເກັບຍອດຄ້າງຊຳລະສຳລັບການບໍລິການຂອງ KP, ການນັດໝາຍທີ່ກຳນົດໄວ້ກັບ KP ຫຼື ໃບສັ່ງຢາສຳລັບຮ້ານຂາຍຢາທີ່ສັ່ງໂດຍຜູ້ໃຫ້ບໍລິການຂອງ KP ສຳລັບການບໍລິການທີ່ມີສິດຮັບ ທີ່ໄດ້ອະທິບາຍຂ້າງເທິງນັ້ນ. ຄົນເຈັບສາມາດຍື່ນຄຳຮ້ອງຂໍໂຄງການ MFA ໄດ້ດ້ວຍຫຼາຍວິທີທາງ, ລວມທັງທາງອອນລາຍ, ແບບເຊິ່ງໜ້າ, ທາງໂທລະສັບ ຫຼື ທາງໃບຄຳຮ້ອງຂໍສະໝັກແບບເປັນເຈ້ຍ.

Proprietary Information. Kaiser Permanente. All rights reserved.
Publication, duplication, disclosure or use for any purpose not expressly authorized in writing is prohibited.
**Printed copies are for reference only. Please see electronic copy for latest approved version.**

**5.3.2.1 ໂຄງການ MFA ຂອງ KP.** ບັນດາຄົນເຈັບຕ້ອງໄດ້ຍື່ນຄຳຮ້ອງຂໍໂຄງການ MFA ໃນພື້ນທີ່ບໍລິການຂອງ KP ທີ່ເຂົາເຈົ້າໄດ້ຮັບການບໍລິການຈາກ KP.

**5.3.2.2 ການຄັດກອງຄົນເຈັບສຳລັບການມີສິດໄດ້ຮັບໂຄງການຂອງລັດ ແລະ ເອກະຊົນ.** KFHP/H ຊຸກຍູ້ໃຫ້ທຸກຄົນໄດ້ຮັບການຄຸ້ມຄອງປະກັນສຸຂະພາບ ເພື່ອຮັບປະກັນການເຂົ້າເຖິງການບໍລິການດ້ານສຸຂະພາບ, ສຳລັບສຸຂະພາບສ່ວນບຸກຄົນໂດຍລວມ ແລະ ການປົກປ້ອງຊັບສິນຂອງຄົນເຈັບ. KFHP/H ຈະຊ່ວຍຄົນເຈັບທີ່ບໍ່ມີປະກັນໄພ ຫຼື ຜູ້ຄ້ຳປະກັນຂອງເຂົາເຈົ້າໃນການກຳນົດ ແລະ ຍື່ນຄຳຮ້ອງຂໍໂຄງການຊ່ວຍເຫຼືອຕ່າງໆທີ່ມີຢູ່ ລວມທັງ Medicaid ແລະ ການຄຸ້ມຄອງທີ່ມີຢູ່ໃນ Health Benefit Exchange. ຄົນເຈັບທີ່ສັນນິຖານວ່າມີສິດໄດ້ຮັບ Medicaid ຫຼື ການຄຸ້ມຄອງທີ່ມີຢູ່ໃນ Health Benefit Exchange ອາດຈະຕ້ອງໄດ້ຍື່ນຄຳຮ້ອງຂໍໂຄງການເຫຼົ່ານັ້ນ. ບັນດາຄົນເຈັບທີ່ມີສະຖານະພາບທາງດ້ານການເງິນທີ່ເກີນເກນກຳນົດການມີສິດໄດ້ຮັບຈາກລາຍໄດ້ ສຳລັບ Medicaid ຈະບໍ່ຈຳເປັນຕ້ອງໄດ້ຍື່ນຄຳຮ້ອງຂໍ Medicaid.

**5.4 ຂໍ້ມູນທີ່ຕ້ອງການ ໃນການຍື່ນຄຳຮ້ອງຂໍ MFA.** ຂໍ້ມູນສ່ວນຕົວ, ຂໍ້ມູນດ້ານການເງິນ ແລະ ຂໍ້ມູນອື່ນໆທີ່ຄົບຖ້ວນ ແມ່ນສິ່ງທີ່ຈຳເປັນ ເພື່ອກວດສອບສະຖານະທາງດ້ານການເງິນຂອງຄົນເຈັບ ເພື່ອກຳນົດການມີສິດໄດ້ຮັບໂຄງການ MFA, ພ້ອມທັງການມີສິດໄດ້ຮັບ Medicaid ແລະ ການຄຸ້ມຄອງທີ່ໄດ້ຮັບເງິນອຸດໜູນ ທີ່ມີຢູ່ໃນ Health Benefit Exchange. ສະຖານະທາງດ້ານການເງິນຂອງຄົນເຈັບ ແມ່ນໄດ້ຮັບການກວດສອບໃນແຕ່ລະຄັ້ງທີ່ຄົນເຈັບຍື່ນຄຳຮ້ອງຂໍການຊ່ວຍເຫຼືອ.

Proprietary Information. Kaiser Permanente. All rights reserved.
Publication, duplication, disclosure or use for any purpose not expressly authorized in writing is prohibited.
**Printed copies are for reference only. Please see electronic copy for latest approved version.**

**5.4.1 ການສະໜອງຂໍ້ມູນທາງດ້ານການເງິນ.** ບັນດາຄົນເຈັບຈໍາເປັນຕ້ອງໄດ້ລະບຸຂໍ້ມູນຂະໜາດຂອງຄົວເຮືອນ ແລະ ລາຍຮັບຂອງຄົວເຮືອນ ພ້ອມກັບຄໍາຮ້ອງຂໍສະໝັກ MFA ຂອງເຂົາເຈົ້າ, ແນວໃດກໍຕາມ, ການສົ່ງເອກະສານທາງດ້ານການເງິນ ເພື່ອໃຫ້ສາມາດກວດສອບສະຖານະທາງດ້ານການເງິນແມ່ນບໍ່ບັງຄັບ ເວັ້ນເສຍແຕ່ໄດ້ຮັບການຮ້ອງຂໍເປັນພິເສດຈາກ KP ເທົ່ານັ້ນ.

**5.4.1.1 ການກວດສອບສະຖານະທາງດ້ານການເງິນ ໂດຍບໍ່ມີການເອກະສານທາງດ້ານການເງິນ.** ຖ້າບໍ່ໄດ້ລະບຸເອກະສານທາງດ້ານການເງິນໄປພ້ອມກັບໃບຄໍາຮ້ອງຂໍສະໝັກ MFA, ສະຖານະທາງດ້ານການເງິນຂອງຄົນເຈັບຈະຖືກກວດສອບ ໂດຍໃຊ້ແຫຼ່ງຂໍ້ມູນພາຍນອກ. ຖ້າບໍ່ສາມາດກວດສອບສະຖານະທາງດ້ານການເງິນຂອງຄົນເຈັບ ໂດຍໃຊ້ແຫຼ່ງຂໍ້ມູນພາຍນອກໄດ້, ຄົນເຈັບອາດຈະຖືກຮ້ອງຂໍໃຫ້ສົ່ງເອກະສານທາງດ້ານການເງິນທີ່ໄດ້ອະທິບາຍໄວ້ໃນຄໍາຮ້ອງຂໍສະໝັກໂຄງການ MFA ເພື່ອຊ່ວຍໃຫ້ສາມາດກວດສອບສະຖານະທາງດ້ານການເງິນຂອງເຂົາເຈົ້າໄດ້.

**5.4.1.2 ການກວດສອບສະຖານະທາງດ້ານການເງິນ ດ້ວຍເອກະສານທາງດ້ານການເງິນ.** ຖ້າໄດ້ລະບຸເອກະສານທາງດ້ານການເງິນຢູ່ໃນຄໍາຮ້ອງຂໍສະໝັກ MFA, ການມີສິດໄດ້ຮັບກໍຈະອີງໃສ່ຂໍ້ມູນທີ່ໄດ້ສະໜອງໃຫ້.

**5.4.2 ການໃຫ້ຂໍ້ມູນທີ່ຄົບຖ້ວນ.** ການມີສິດໄດ້ຮັບໂຄງການ MFA ຈະໄດ້ຮັບການຕັດສິນ ເມື່ອໄດ້ຮັບຂໍ້ມູນສ່ວນຕົວ, ຂໍ້ມູນການເງິນ ແລະ ຂໍ້ມູນອື່ນໆ ທີ່ຮ້ອງຂໍທັງໝົດແລ້ວ.

**5.4.3 ຂໍ້ມູນທີ່ບໍ່ຄົບຖ້ວນ.** ຄົນເຈັບຈະໄດ້ຮັບການແຈ້ງບອກແບບເຊິ່ງໜ້າ, ທາງໄປສະນີ ຫຼື ທາງໂທລະສັບ ຖ້າຂໍ້ມູນທີ່ຕ້ອງການທີ່ໄດ້ຮັບບໍ່ຄົບຖ້ວນ.

Proprietary Information. Kaiser Permanente. All rights reserved.
Publication, duplication, disclosure or use for any purpose not expressly authorized in writing is prohibited.
**Printed copies are for reference only. Please see electronic copy for latest approved version.**

ຄົນເຈັບສາມາດສົ່ງຂໍ້ມູນທີ່ຂາດຫາຍໄປພາຍໃນ 30 ວັນ ນັບຈາກ: ວັນທີທີ່ສົ່ງແຈ້ງການອອກໄປ, ວັນທີມີການສົນທະນາແບບເຊິ່ງໜ້າ ຫຼື ການສົນທະນາທາງໂທລະສັບເກີດຂຶ້ນ. MFA ອາດຈະຖືກປະຕິເສດ ເນື່ອງຈາກຂໍ້ມູນທີ່ບໍ່ຄົບຖ້ວນ.

**5.4.4 ບໍ່ມີຂໍ້ມູນທີ່ຮ້ອງຂໍ.**
ຄົນເຈັບທີ່ບໍ່ມີຂໍ້ມູນທີ່ຮ້ອງຂໍທີ່ໄດ້ອະທິບາຍໄວ້ໃນຄໍາຮ້ອງຂໍສະໝັກໂຄງການສາມາດຈະຕິດຕໍ່ KFHP/H ເພື່ອປຶກສາຫາລືເຖິງເອກະສານອື່ນໆທີ່ມີ ເພື່ອສະແດງໃຫ້ເຫັນເຖິງການມີສິດໄດ້ຮັບ.

**5.4.5 ບໍ່ມີຂໍ້ມູນທາງດ້ານການເງິນ.**
ຄົນເຈັບຈໍາເປັນຕ້ອງໄດ້ໃຫ້ຂໍ້ມູນທາງດ້ານການເງິນພື້ນຖານ (ເຊັ່ນ: ລາຍຮັບ, ຖ້າມີ ແລະ ແຫຼ່ງຂໍ້ມູນ) ເປັນຢ່າງໜ້ອຍ ແລະ ຢັ້ງຢືນຄວາມຖືກຕ້ອງຂອງຂໍ້ມູນ ເມື່ອ: (1) ສະຖານະທາງດ້ານການເງິນຂອງເຂົາເຈົ້າຈະບໍ່ສາມາດກວດສອບໄດ້ໂດຍໃຊ້ແຫຼ່ງຂໍ້ມູນພາຍນອກ; (2) ບໍ່ມີຂໍ້ມູນທາງດ້ານການເງິນທີ່ຮ້ອງຂໍ; ແລະ (3) ບໍ່ມີເອກະສານອື່ນໆທີ່ອາດສາມາດສະແດງໃຫ້ເຫັນເຖິງການມີສິດໄດ້ຮັບ. ຂໍ້ມູນທາງດ້ານການເງິນພື້ນຖານ ແລະ ການຢັ້ງຢືນ ແມ່ນຈໍາເປັນຕ້ອງມີຈາກຄົນເຈັບ ຖ້າຫາກມີຂໍ້ໃດໜຶ່ງຕໍ່ໄປນີ້ເປັນຈິງ:

**5.4.5.1** ຄົນເຈັບເປັນຄົນທີ່ບໍ່ມີທີ່ຢູ່ອາໄສ ຫຼື ຜູ້ໄດ້ຮັບການເບິ່ງແຍງດູແລຈາກຄລີນິກຄົນບໍ່ມີທີ່ຢູ່ອາໄສ.

**5.4.5.2** ຄົນເຈັບບໍ່ມີລາຍຮັບ, ບໍ່ມີໃບບິນຮັບຄ່າຈ້າງຢ່າງເປັນທາງການຈາກນາຍຈ້າງຂອງພວກເຂົາ (ຍົກເວັ້ນຜູ້ທີ່ເຮັດທຸລະກິດຂອງຕົນເອງ), ໄດ້ຮັບຂອງຂວັນເປັນເງິນ ຫຼື ບໍ່ຈໍາເປັນຕ້ອງໄດ້ຍື່ນແຈ້ງເສຍອາກອນລາຍໄດ້ຂອງລັດ ຫຼື ລັດຖະບານກາງໃນປີອາກອນທີ່ຜ່ານມາ.

Proprietary Information. Kaiser Permanente. All rights reserved.
Publication, duplication, disclosure or use for any purpose not expressly authorized in writing is prohibited.
**Printed copies are for reference only. Please see electronic copy for latest approved version.**

**5.4.5.3** ຄົນເຈັບໄດ້ຮັບຜົນກະທົບຈາກໄພພິບັດລະດັບຊາດ ຫຼື ພາກພື້ນທີ່ຮູ້ຈັກກັນດີ ຫຼື ພາວະສຸກເສີນດ້ານສາທາລະນະສຸກ (ເບິ່ງຂໍ້ 5.11 ຂ້າງລຸ່ມນີ້).

**5.4.6 ການຮ່ວມມືຂອງຄົນເຈັບ.** ຄົນເຈັບຈຳເປັນຕ້ອງໄດ້ພະຍາຍາມຢ່າງສົມເຫດສົມຜົນ ເພື່ອສະໜອງຂໍ້ມູນທີ່ຮ້ອງຂໍທັງໝົດ. ຖ້າບໍ່ໄດ້ສະໜອງຂໍ້ມູນທີ່ຮ້ອງຂໍທັງໝົດບໍ່ໃຫ້, ສະຖານະການຕ່າງໆກໍອາດຈະໄດ້ຮັບການພິຈາລະນາໃນເວລາຕັດສິນການມີສິດໄດ້ຮັບ.

**5.5 ການຕັດສິນການມີສິດໄດ້ຮັບແບບສັນນິຖານ.** ການຊ່ວຍເຫຼືອທາງດ້ານການເງິນ ອາດຈະໄດ້ຮັບການອະນຸມັດ ໃນກໍລະນີທີ່ບໍ່ມີຄຳຮ້ອງສະໝັກທີ່ຄົບຖ້ວນສົມບູນ ໃນສະຖານະການທີ່ຄົນເຈັບມີຍອດຄ້າງຊຳລະ, ບໍ່ມີຄຳຕອບກັບຕໍ່ຄວາມພະຍາຍາມໃນການຕິດຕໍ່ຂອງ KP ແລະ ບໍ່ໄດ້ສະໝັກຂໍ ແຕ່ຂໍ້ມູນອື່ນໆທີ່ມີຢູ່ຊ່ວຍຢືນຢັນໃຫ້ເຫັນວ່າມີຄວາມຫຍຸ້ງຍາກທາງດ້ານການເງິນ. ຖ້າໄດ້ຮັບການຕັດສິນວ່າມີສິດໄດ້ຮັບ, ຄົນເຈັບບໍ່ຈຳເປັນຕ້ອງໄດ້ໃຫ້ຂໍ້ມູນສ່ວນຕົວ, ຂໍ້ມູນທາງດ້ານການເງິນ ຫຼື ຂໍ້ມູນອື່ນໆ ເພື່ອກວດສອບສະຖານະທາງດ້ານການເງິນ ແລະ ຈະໄດ້ຮັບລາງວັນ MFA ໂດຍອັດຕະໂນມັດ. ເຫດຜົນ ແລະ ຂໍ້ມູນສະໜັບສະໜູນ ການຕັດສິນການມີສິດໄດ້ຮັບແບບສັນນິຖານ ຈະຖືກບັນທຶກໄວ້ໃນບັນຊີຂອງຄົນເຈັບ ແລະ ອາດຈະລວມບັນທຶກເພີ່ມຕື່ມຂອງຄົນເຈັບອີກດ້ວຍ. ຄົນເຈັບຈະໄດ້ຮັບການສັນນິຖານວ່າມີສິດໄດ້ຮັບ ແລະ ໄດ້ຮັບການຍົກເວັ້ນຈາກຂໍ້ກຳນົດດ້ານເອກະສານ ຖ້າຄົນເຈັບໄດ້ຜ່ານເງື່ອນໄຂມາກ່ອນແລ້ວ ຫຼື ມີຂໍ້ບົ່ງຊີ້ໃຫ້ເຫັນເຖິງຄວາມຫຍຸ້ງຍາກທາງດ້ານການເງິນ.

**5.5.1 ໄດ້ຜ່ານເງື່ອນໄຂມາກ່ອນແລ້ວ.** ສະຖານະການຕ່າງໆ ທີ່ມີຫຼັກຖານວ່າຄົນເຈັບໄດ້ລົງທະບຽນ ຫຼື

Proprietary Information. Kaiser Permanente. All rights reserved.
Publication, duplication, disclosure or use for any purpose not expressly authorized in writing is prohibited.
**Printed copies are for reference only. Please see electronic copy for latest approved version.**

ໄດ້ຮັບການຕັດສິນໂດຍຂະບວນການຄັດກອງທາງດ້ານການເງິນ ເພື່ອຊອກເບິ່ງການມີເງື່ອນໄຂທີ່ເປັນໄປໄດ້ ສຳລັບໂຄງການຊ່ວຍເຫຼືອຂອງລັດ ແລະ ເອກະຊົນ ທີ່ໄດ້ລະບຸໄວ້ຂ້າງລຸ່ມນີ້ ແມ່ນໄດ້ຮັບການສັນນິຖານວ່າມີສິດໄດ້ຮັບ (ເຊັ່ນ: ໄດ້ຜ່ານເງື່ອນໄຂມາກ່ອນແລ້ວ) ສຳລັບໂຄງການ MFA. ໂຄງການຈະຖືວ່າ ຄົນເຈັບໄດ້ຜ່ານເງື່ອນໄຂມາກ່ອນແລ້ວ ຖ້າຫາກວ່າຄົນເຈັບບັນລຸໄດ້ຕາມເກນໃດໜຶ່ງ ຕໍ່ໄປນີ້:

**5.5.1.1** ໄດ້ລົງທະບຽນເຂົ້າໃນໂຄງການ Community MFA (CMFA) ທີ່ຄົນເຈັບໄດ້ຮັບການນຳສົ່ງຕໍ່ ແລະ ໄດ້ຜ່ານເງື່ອນໄຂມາກ່ອນແລ້ວ ໂດຍຜ່ານ: (1) ລັດຖະບານຂອງລັດຖະບານກາງ, ລັດ ຫຼື ທ້ອງຖິ່ນ, (2) ອົງການຈັດຕັ້ງໃນຊຸມຊົນທີ່ເປັນຄູ່ຮ່ວມມື ຫຼື (3) ໃນງານກິດຈະກຳດ້ານສຸຂະພາບຊຸມຊົນທີ່ໄດ້ຮັບການສະໜັບສະໜູນຈາກ KFHP/H.

**5.5.1.2** ໄດ້ລົງທະບຽນເຂົ້າໃນໂຄງການ KP Community Benefit ທີ່ໄດ້ຮັບການອອກແບບມາເພື່ອສະໜັບສະໜູນການເຂົ້າເຖິງການເບິ່ງແຍງດູແລຄົນເຈັບທີ່ມີລາຍໄດ້ຕໍ່າ ແລະ ໄດ້ຜ່ານເງື່ອນໄຂມາກ່ອນແລ້ວ ໂດຍພະນັກງານຂອງ KFHP/H ທີ່ໄດ້ຮັບມອບໝາຍ.

**5.5.1.3** ໄດ້ລົງທະບຽນ ຫຼື ໄດ້ຮັບການສັນນິຖານວ່າມີສິດໄດ້ຮັບໂຄງການປະກັນສຸຂະພາບທີ່ໄດ້ຜ່ານການທົດສອບແບບສະເລ່ຍທີ່ໜ້າເຊື່ອຖື (ເຊັ່ນ: Medicaid, ໂຄງການເງິນອຸດໜູນຜູ້ມີລາຍໄດ້ຕໍ່າຂອງ Medicare, ການຄຸ້ມຄອງແບບໄດ້ຮັບເງິນອຸດໜູນ ທີ່ມີໃຫ້ຢູ່ໃນ Health Benefit Exchange).

**5.5.1.4** ໄດ້ລົງທະບຽນເຂົ້າໃນໂຄງການຊ່ວຍເຫຼືອຂອງລັດທີ່ໄດ້ຜ່ານການທົດສອບແບບສະເລ່ຍທີ່ໜ້າເຊື່ອຖື (ເຊັ່ນ: ບັນດາໂຄງການສຳລັບແມ່ຍິງ, ເດັກທາລົກ ແລະ ເດັກນ້ອຍ, ໂຄງການໂພຊະນາການ ແລະ

Proprietary Information. Kaiser Permanente. All rights reserved.
Publication, duplication, disclosure or use for any purpose not expressly authorized in writing is prohibited.
**Printed copies are for reference only. Please see electronic copy for latest approved version.**

ການຊ່ວຍເຫຼືອເສີມ, ໂຄງການຊ່ວຍເຫຼືອດ້ານພະລັງງານສຳລັບຄົວເຮືອນທີ່ມີລາຍໄດ້ຕ່ຳ, ໂຄງການກິນອາຫານທ່ຽງແບບບໍ່ເສຍຄ່າ ຫຼື ຫຼຸດລາຄາ).

**5.5.1.5** ອາໄສຢູ່ໃນເຮືອນສຳລັບຜູ້ທີ່ມີລາຍໄດ້ຕ່ຳ ຫຼື ໄດ້ຮັບເງິນອຸດໜູນ.

**5.5.1.6** ເຄີຍໄດ້ຮັບລາງວັນ MFA ມາແລ້ວໃນກ່ອນໜ້ານີ້ ທີ່ຫາກໍເລີ່ມຕົ້ນພາຍໃນ 30 ວັນທີ່ຜ່ານມາ.

**5.5.2 ສິ່ງທີ່ບົ່ງຊີ້ໃຫ້ເຫັນເຖິງຄວາມຫຍຸ້ງຍາກທາງດ້ານການເງິນ.** ຄົນເຈັບທີ່ໄດ້ຮັບການເບິ່ງແຍງດູແລຢູ່ໃນສະຖານບິນບົວຂອງ KP ແລະ ຜູ້ທີ່ມີສິ່ງຊີ້ບອກໃຫ້ເຫັນເຖິງຄວາມຫຍຸ້ງຍາກທາງດ້ານການເງິນ (ເຊັ່ນ: ມີຍອດຄ້າງຊຳລະທີ່ກາຍກຳນົດ ຫຼື ບໍ່ສາມາດຊຳລະໄດ້) ອາດຈະໄດ້ຮັບການຄັດກອງເບິ່ງການມີສິດໄດ້ຮັບໂຄງການ ແລະ ຄວາມຫຍຸ້ງຍາກທາງດ້ານການເງິນຈາກ KP ໂດຍໃຊ້ແຫຼ່ງຂໍ້ມູນພາຍນອກ. ຖ້າມີສິດໄດ້ຮັບ, ຄົນເຈັບຈະໄດ້ຮັບລາງວັນ MFA ສຳລັບຍອດຄ້າງຊຳລະທີ່ມີສິດໄດ້ຮັບເທົ່ານັ້ນ.

**5.5.2.1 ການກຳນົດການມີສິດໄດ້ຮັບໂດຍ KP.** KP ອາດຈະຄັດກອງຄົນເຈັບເພື່ອເບິ່ງການມີສິດໄດ້ຮັບໂຄງການ ກ່ອນທີ່ຍອດຄ້າງຊຳລະຂອງພວກເຂົາຈະຖືກມອບໃຫ້ແກ່ໜ່ວຍງານເກັບໜີ້ສິນ.

**5.5.2.1.1 ຍອດຄ້າງຊຳລະທີ່ຊຳລະດ້ວຍຕົນເອງ.** KP ຈະຄັດກອງຄົນເຈັບທີ່ຖືກກຳນົດສົ່ງມອບໃຫ້ໜ່ວຍງານເກັບໜີ້ສິນ ເພື່ອຄົ້ນຄວ້າເບິ່ງການມີສິດໄດ້ຮັບໂຄງການ

Proprietary Information. Kaiser Permanente. All rights reserved.
Publication, duplication, disclosure or use for any purpose not expressly authorized in writing is prohibited.
**Printed copies are for reference only. Please see electronic copy for latest approved version.**

ໂດຍອີງໃສ່ເກນການທົດສອບແບບສະເລ່ຍ. ເບິ່ງຂໍ້ 5.6.1 ຂ້າງລຸ່ມນີ້.

**5.5.2.1.2 ສິ່ງທີ່ບົ່ງຊີ້ໃຫ້ເຫັນເຖິງຄວາມຫຍຸ້ງຍາກທາງດ້ານການເງິນ.**
ຂໍ້ມູນທາງດ້ານການເງິນສຳລັບຄົນເຈັບບາງຄົນທີ່ມີຍອດຄ້າງຊຳລະ ອາດຈະບໍ່ມີໃຫ້ເພື່ອນຳມາໃຊ້ໃນການຕັດສິນການມີສິດໄດ້ຮັບ, ແຕ່ສິ່ງບົ່ງຊີ້ເຖິງຄວາມຄວາມຫຍຸ້ງຍາກທາງດ້ານການເງິນອື່ນໆ ທີ່ໄດ້ເປີດເຜີຍໃຫ້ KP ຮັບຊາບ ອາດຈະສາມາດນຳໄປສູ່ການກຳນົດລາຍໄດ້ຕໍ່າໄດ້. ຍອດຄ້າງຊຳລະທີ່ມີສິດໄດ້ຮັບຈະຖືກນຳມາສະໝັກຂໍໂຄງການ MFA ໄດ້ ແລະ ຈະບໍ່ຖືກດຳເນີນການຮຽກເກັບຕື່ມອີກ. ສິ່ງບົ່ງຊີ້ເຖິງຄວາມຫຍຸ້ງຍາກທາງດ້ານການເງິນອາດຈະລວມທັງ, ແຕ່ບໍ່ຈຳກັດພຽງແຕ່:

**5.5.2.1.2.1** ຄົນເຈັບແມ່ນຄົນທີ່ບໍ່ແມ່ນພົນລະເມືອງສະຫະລັດທີ່ບໍ່ມີຜູ້ສະໜັບສະໜູນ, ບໍ່ມີໝາຍເລກປະກັນສັງຄົມ, ບັນທຶກການເສຍອາກອນ ຫຼື ທີ່ຢູ່ໃນໃບບິນທີ່ຖືກຕ້ອງ; ບໍ່ມີການຕິດຕໍ່ສື່ສານກັບ KP ກ່ຽວກັບບັນຊີຂອງເຂົາເຈົ້າ ແລະ ຈາກຄວາມພະຍາຍາມໃນການຮຽກເກັບຢ່າງສົມເຫດສົມຜົນສະແດງໃຫ້ເຫັນວ່າຄົນເຈັບບໍ່ມີຊັບພະຍາກອນທາງດ້ານການເງິນ ຫຼື ຊັບສິນໃດໆ

Proprietary Information. Kaiser Permanente. All rights reserved.
Publication, duplication, disclosure or use for any purpose not expressly authorized in writing is prohibited.
**Printed copies are for reference only. Please see electronic copy for latest approved version.**

ຢູ່ໃນປະເທດຕົ້ນກຳເນີດຂອງເຂົາເຈົ້າ.

**5.5.2.1.2.2** ຄົນເຈັບມີຍອດຄ້າງຊຳລະສຳລັບການບໍລິການຕ່າງໆຂອງ KP ທີ່ໄດ້ສະໜອງໃຫ້ໃນກ່ອນໜ້າ ແລະ ນັບຕັ້ງແຕ່ນັ້ນມາ ກໍໄດ້ຖືກຄຸມຂັງຢູ່ໃນຄຸກເປັນໄລຍະເວລາທີ່ຍາວນານ; ບໍ່ໄດ້ແຕ່ງງານ; ບໍ່ມີສິ່ງຊີ້ບອກເຖິງລາຍຮັບ ແລະ KP ບໍ່ສາມາດຕິດຕໍ່ຄົນເຈັບໄດ້.

**5.5.2.1.2.3** ຄົນເຈັບໄດ້ເສຍຊີວິດໄປແລ້ວໂດຍບໍ່ມີຊັບສິນ/ສົມບັດ ຫຼື ບັນທຶກກ່ຽວກັບຍາດພີ່ນ້ອງທີ່ຈະມາຮັບຜິດຊອບໜີ້ສິນ.

**5.5.2.1.2.4** ຄົນເຈັບໄດ້ເສຍຊີວິດໄປແລ້ວ ແລະ ການພິສູດພິໃນກຳ ຫຼື ຊັບສິນ ສະແດງໃຫ້ເຫັນເຖິງພາວະທີ່ບໍ່ສາມາດຊຳລະໜີ້ໄດ້.

**5.6** **ເກນການມີສິດໄດ້ຮັບໂຄງການ.** ດັ່ງທີ່ໄດ້ສະຫຼຸບໄວ້ໃນຂໍ້ V ຂອງພາກຜະໜວກສະເພາະພາກພື້ນ, ຄົນເຈັບທີ່ຍື່ນຄຳຮ້ອງຂໍ MFA ອາດຈະມີເງື່ອນໄຂໄດ້ຮັບການຊ່ວຍເຫຼືອດ້ານການເງິນໂດຍອີງໃສ່ການທົດສອບແບບສະເລ່ຍ ຫຼື ເກນການໄດ້ຮັບຄ່າໃຊ້ຈ່າຍທາງການແພດລະດັບສູງ. ເບິ່ງ *ພາກຜະໜວກສຳລັບພື້ນທີ່ຕ່າງໆຂອງ Kaiser Permanente, ເອກະສານຄັດຕິດ 1-8.*

Proprietary Information. Kaiser Permanente. All rights reserved.
Publication, duplication, disclosure or use for any purpose not expressly authorized in writing is prohibited.
**Printed copies are for reference only. Please see electronic copy for latest approved version.**

**5.6.1 ເກນການທົດສອບແບບສະເວ່ຍ.** ຄົນເຈັບຈະຖືກປະເມີນ ເພື່ອກຳນົດວ່າຄົນເຈັບສາມາດບັນລຸໄດ້ຕາມເກນການມີສິດໄດ້ຮັບດ້ວຍການທົດສອບແບບສະເວ່ຍ ຫຼື ບໍ່.

**5.6.1.1 ການມີສິດໄດ້ຮັບ ໂດຍອີງໃສ່ລະດັບລາຍຮັບ.** ຄົນເຈັບທີ່ມີລາຍໄດ້ລວມຂອງຄົວເຮືອນໜ້ອຍກວ່າ ຫຼື ເທົ່າກັບ ເກນການທົດສອບແບບສະເວ່ຍຂອງ KFHP/H ເປັນເປີເຊັນຕາມ ຄຳແນະນຳວ່າດ້ວຍຄວາມທຸກຍາກຂອງລັດຖະບານກາງ (FPG) ແມ່ນມີສິດໄດ້ຮັບການຊ່ວຍເຫຼືອດ້ານການເງິນ. ຊັບສິນຕ່າງໆຈະບໍ່ຖືກນຳມາພິຈາລະນາໃນການທົດສອບແບບສະເວ່ຍ.

**5.6.1.2 ລາຍຮັບຂອງຄົວເຮືອນ.** ຂໍ້ກຳນົດດ້ານລາຍຮັບ ຈະມີຜົນບັງຄັບໃຊ້ກັບສະມາຊິກໃນຄົວເຮືອນ. ຄົວເຮືອນ ໝາຍເຖິງ ບຸກຄົນຄົນດຽວ ຫຼື ກຸ່ມຄົນທີ່ມີຕັ້ງແຕ່ສອງຄົນຂຶ້ນໄປ ທີ່ມີຄວາມສຳພັນກັນໂດຍການເກີດ, ການແຕ່ງງານ ຫຼື ການຮັບເດັກມາເປັນລູກລ້ຽງ ທີ່ອາໄສຢູ່ນຳກັນ. ບັນດາສະມາຊິກໃນຄົວເຮືອນ ອາດຈະປະກອບດ້ວຍ ຄູ່ສົມລົດ, ຄູ່ຮັກທີ່ມີເງື່ອນໄຂ, ເດັກນ້ອຍ, ຍາດພີ່ນ້ອງຂອງຜູ້ເບິ່ງແຍງດູແລ, ລູກຂອງຍາດພີ່ນ້ອງຂອງຜູ້ເບິ່ງແຍງດູແລ ແລະ ບຸກຄົນອື່ນໆ ສຳລັບບຸກຄົນທີ່ໂສດ, ຄູ່ສົມລົດ, ຄູ່ຮັກ ຫຼື ພໍ່ແມ່ ເປັນຜູ້ຮັບຜິດຊອບທາງດ້ານການເງິນ ທີ່ອາໄສຢູ່ໃນຄົວເຮືອນ.

**5.6.2 ເກນການມີສິດໄດ້ຮັບຄ່າໃຊ້ຈ່າຍທາງການແພດໃນລະດັບສູງ.** ຄົນເຈັບຈະຖືກປະເມີນ ເພື່ອກຳນົດວ່າ ຄົນເຈັບບັນລຸໄດ້ຕາມເກນການມີສິດໄດ້ຮັບຄ່າໃຊ້ຈ່າຍທາງການແພດໃນລະດັບສູງ ຫຼື ບໍ່.

**5.6.2.1 ການມີສິດໄດ້ຮັບ ໂດຍອີງໃສ່ຄ່າໃຊ້ຈ່າຍທາງການແພດໃນລະດັບສູງ.**

Proprietary Information. Kaiser Permanente. All rights reserved.
Publication, duplication, disclosure or use for any purpose not expressly authorized in writing is prohibited.
**Printed copies are for reference only. Please see electronic copy for latest approved version.**

ຄົນເຈັບທີ່ມີລະດັບລາຍໄດ້ລວມຍອດຂອງຄົວເຮືອນໃດໜຶ່ງ ທີ່ມີຄ່າໃຊ້ຈ່າຍທາງການແພດ ແລະ ຮ້ານຂາຍຢາທີ່ຕ້ອງໄດ້ຈົກຖົງຈ່າຍເອງສຳລັບການບໍລິການທີ່ມີສິດໄດ້ຮັບ ໃນໄລຍະ 12 ເດືອນກ່ອນການຍື່ນຄຳຮ້ອງຂໍ ຫຼາຍກວ່າ ຫຼື ເທົ່າກັບ 10% ຂອງລາຍຮັບຄົວເຮືອນປະຈຳປີ ແມ່ນມີສິດໄດ້ຮັບການຊ່ວຍເຫຼືອທາງດ້ານການເງິນ.

**5.6.2.1.1** **ຄ່າໃຊ້ຈ່າຍທີ່ຕ້ອງໄດ້ຈົກຖົງຈ່າຍເອງຂອງ KFHP/H.** ຄ່າໃຊ້ຈ່າຍທາງການແພດ ແລະ ຮ້ານຂາຍຢາ ທີ່ເກີດຂຶ້ນຢູ່ບັນດາສະຖານປິ່ນປົວຂອງ KP ປະກອບໄປດ້ວຍ ການຈ່າຍຮ່ວມ, ເງິນມັດຈຳ, ການປະກັນໄພຮ່ວມ ແລະ ຈຳນວນທີ່ເປັນຄວາມຮັບຜິດຊອບສ່ວນທຳອິດ ທີ່ກ່ຽວຂ້ອງກັບການບໍລິການທີ່ມີສິດໄດ້ຮັບ.

**5.6.2.1.2** **ຄ່າໃຊ້ຈ່າຍທີ່ຕ້ອງໄດ້ຈົກຖົງຈ່າຍເອງທີ່ບໍ່ແມ່ນຂອງ KFHP/H.** ຄ່າໃຊ້ຈ່າຍທາງການແພດ, ຮ້ານຂາຍຢາ ແລະ ທັນຕະກຳ ທີ່ສະໜອງໃຫ້ຢູ່ໃນສະຖານປິ່ນປົວທີ່ບໍ່ແມ່ນຂອງ KP ທີ່ກ່ຽວຂ້ອງກັບການບໍລິການທີ່ຈຳເປັນທາງການແພດທີ່ມີສິດໄດ້ຮັບ ແລະ ທີ່ເກີດຂຶ້ນໂດຍຄົນເຈັບ (ບໍ່ລວມສ່ວນຫຼຸດ ຫຼື ການຕັດອອກໃດໆ) ແມ່ນໄດ້ຮັບການລວມເຂົ້າດ້ວຍ. ຄົນເຈັບຈະຕ້ອງໄດ້ສະໜອງເອກະສານຄ່າໃຊ້ຈ່າຍທາງການແພດ ສຳລັບການບໍລິການທີ່ໄດ້ຮັບຈາກສະຖານປິ່ນປົວທີ່ບໍ່ແມ່ນຂອງ KP.

**5.6.2.1.2.1** ຖ້າຜູ້ໃຫ້ບໍລິການທີ່ບໍ່ແມ່ນຂອງ KFHP/H

ທີ່ມີການຮຽກເກັບຄ່າບໍລິການເກີດຂຶ້ນ ມີໂຄງການຊ່ວຍເຫຼືອທາງດ້ານການເງິນທີ່ຄົນເຈັບອາດຈະມີສິດໄດ້ຮັບ, ຄົນເຈັບຕ້ອງໄດ້ຍື່ນຄໍາຮ້ອງຂໍກ່ອນທີ່ຈະມີຄ່າບໍລິການຈະຖືກພິຈາລະນາວ່າເປັນຄ່າໃຊ້ຈ່າຍທາງການແພດທີ່ມີສິດໄດ້ຮັບ.

**5.6.2.1.3 ເບ້ຍປະກັນໄພແຜນສຸຂະພາບ.** ຄ່າໃຊ້ຈ່າຍທີ່ຕ້ອງຈ່າຍຖືງຈ່າຍເອງ ບໍ່ລວມຄ່າໃຊ້ຈ່າຍທີ່ກ່ຽວຂ້ອງກັບການຄຸ້ມຄອງການເບິ່ງແຍງດູແລສຸຂະພາບ (ເຊັ່ນ: ຄ່າທໍານຽມ ຫຼື ເບ້ຍປະກັນໄພ).

**5.7 ການປະຕິເສດ ແລະ ການອຸທອນ**

**5.7.1 ການປະຕິເສດ.** ຄົນເຈັບທີ່ຍື່ນຄໍາຮ້ອງຂໍໂຄງການ MFA ແລະ ບໍ່ສາມາດບັນລຸໄດ້ຕາມເກນການມີສິດໄດ້ຮັບ ຈະໄດ້ຮັບການແຈ້ງໃຫ້ຊາບເປັນລາຍລັກອັກສອນວ່າຄໍາຮ້ອງຂໍ MFA ຂອງຜູ້ກ່ຽວໄດ້ຖືກປະຕິເສດ.

**5.7.2 ວິທີການອຸທອນການປະຕິເສດຂອງ MFA.** ບັນດາຄົນເຈັບທີ່ຖືກປະຕິເສດ MFA ຫຼື ໄດ້ຮັບການອະນຸມັດແລ້ວ ແລະ ເຊື່ອວ່າຕົນມີຄຸນເງື່ອນໄຂໄດ້ຮັບລາງວັນ MFA ທີ່ສູງກວ່າ ສາມາດຈະຂໍອຸທອນການຕັດສິນໃຈໄດ້. ບັນດາຄົນເຈັບໄດ້ຮັບການຊຸກຍູ້ໃຫ້ອຸທອນ ຖ້າພວກເຂົາ: (1) ຍັງບໍ່ໄດ້ສົ່ງເອກະສານທາງດ້ານການເງິນມາກ່ອນ, ຫຼື (2) ລາຍຮັບຂອງຄົວເຮືອນຂອງເຂົາເຈົ້າມີການປ່ຽນແປງ. ຄໍາແນະນໍາສໍາລັບການດໍາເນີນຂະບວນການອຸທອນໃຫ້ສໍາເລັດແມ່ນໄດ້ລະບຸໄວ້ຢູ່ໃນຈົດໝາຍປະຕິເສດ ແລະ ຈົດໝາຍອະນຸມັດ MFA ພ້ອມທັງໃນເວັບໄຊຂອງ MFA. ການອຸທອນຈະໄດ້ຮັບການກວດສອບໂດຍພະນັກງານຂອງ KFHP/H

Proprietary Information. Kaiser Permanente. All rights reserved.
Publication, duplication, disclosure or use for any purpose not expressly authorized in writing is prohibited.
**Printed copies are for reference only. Please see electronic copy for latest approved version.**

ທີ່ໄດ້ຮັບການມອບໝາຍ. ບັນດາຄົນເຈັບຈະໄດ້ຮັບການແຈ້ງໃຫ້ຊາບເປັນລາຍລັກອັກສອນກ່ຽວກັບຜົນຂອງການອຸທອນຂອງເຂົາເຈົ້າ. ການຕັດສິນໃຈຕໍ່ການອຸທອນທັງໝົດແມ່ນເປັນຂັ້ນສຸດທ້າຍ.

**5.8** **ໂຄງສ້າງລາງວັນ.** ລາງວັນຕ່າງໆຂອງ MFA ແມ່ນນໍາມາໃຊ້ກັບຍອດທີ່ກາຍກໍານົດ ຫຼື ຍອດຄ້າງຊໍາລະ, ຍອດເງິນທີ່ຖືກມອບໃຫ້ແກ່ໜ່ວຍງານເກັບໜີ້ສິນ ແລະ ຄ່າບໍລິການທີ່ຍັງຄ້າງຢູ່. ນອກຈາກນັ້ນ, ລາງວັນຕ່າງໆຂອງ MFA ກໍຍັງອາດຈະລວມທັງໄລຍະເວລາການມີສິດໄດ້ຮັບ ສໍາລັບການບໍລິການຕິດຕາມຜົນທີ່ຕ້ອງການໃດໜຶ່ງ ຕາມການກໍານົດໂດຍຜູ້ໃຫ້ບໍລິການຂອງ KP.

**5.8.1** **ພື້ນຖານຂອງລາງວັນ.** ຄ່າໃຊ້ຈ່າຍຂອງຄົນເຈັບ ທີ່ໂຄງການ MFA ຈ່າຍໃຫ້ ແມ່ນຖືກກໍານົດໂດຍອີງໃສ່ວ່າຄົນເຈັບມີການຄຸ້ມຄອງການເບິ່ງແຍງດູແລສຸຂະພາບ ຫຼື ບໍ່ ແລະ ອີງໃສ່ລາຍຮັບຄົວເຮືອນຂອງຄົນເຈັບ.

**5.8.1.1** **ຄົນເຈັບທີ່ມີສິດໄດ້ຮັບ MFA ໂດຍບໍ່ມີການຄຸ້ມຄອງການເບິ່ງແຍງດູແລສຸຂະພາບ (ບໍ່ມີປະກັນໄພ).** ຄົນເຈັບທີ່ບໍ່ມີປະກັນໄພທີ່ມີສິດໄດ້ຮັບ ຈະໄດ້ຮັບສ່ວນຫຼຸດໃນຄ່າໃຊ້ຈ່າຍຂອງຄົນເຈັບສໍາລັບການບໍລິການທີ່ມີສິດໄດ້ຮັບທັງໝົດ.

**5.8.1.2** **ຄົນເຈັບທີ່ມີສິດໄດ້ຮັບ MFA ທີ່ມີການຄຸ້ມຄອງການເບິ່ງແຍງດູແລສຸຂະພາບ (ມີປະກັນໄພ).** ຄົນເຈັບທີ່ມີປະກັນໄພທີ່ມີສິດໄດ້ຮັບ ຈະໄດ້ຮັບສ່ວນຫຼຸດໃນຄ່າໃຊ້ຈ່າຍຂອງຄົນເຈັບສໍາລັບການບໍລິການທີ່ມີສິດໄດ້ຮັບທັງໝົດ ທີ່ (1) ຄົນເຈັບຕ້ອງເປັນຜູ້ຮັບຜິດຊອບດ້ວຍຕົນເອງ, ແລະ (2) ບໍ່ໄດ້ຮັບການຈ່າຍໃຫ້ໂດຍບໍລິສັດປະກັນໄພຂອງເຂົາເຈົ້າ. ຄົນເຈັບຈໍາເປັນຕ້ອງໄດ້ສະໜອງເອກະສານ ເຊັ່ນ: ຄໍາອະທິບາຍກ່ຽວກັບສິດທິປະໂຫຍດ (EOB), ເພື່ອກໍານົດສ່ວນຂອງໃບບິນທີ່ບໍ່ໄດ້ຮັບການຄຸ້ມຄອງຈາກ

Proprietary Information. Kaiser Permanente. All rights reserved.
Publication, duplication, disclosure or use for any purpose not expressly authorized in writing is prohibited.
**Printed copies are for reference only. Please see electronic copy for latest approved version.**

ປະກັນໄພ. ຄົນເຈັບທີ່ມີປະກັນໄພທີ່ມີສິດໄດ້ຮັບຕ້ອງໄດ້ຍື່ນອຸທອນຕໍ່ບໍລິສັດປະກັນໄພຂອງເຂົາເຈົ້າສໍາລັບການຮຽກທວງທີ່ຖືກປະຕິເສດ. ບັນດາຄົນເຈັບທີ່ມີປະກັນໄພທີ່ມີສິດໄດ້ຮັບຕ້ອງໄດ້ສະໜອງເອກະສານກ່ຽວກັບການປະຕິເສດການອຸທອນຂອງບໍລິສັດປະກັນໄພຂອງພວກເຂົາ.

**5.8.1.2.1 ການຈ່າຍເງິນທີ່ໄດ້ຮັບຈາກບໍລິສັດປະກັນໄພ.** ຄົນເຈັບທີ່ມີປະກັນໄພທີ່ມີສິດໄດ້ຮັບແມ່ນຕ້ອງໄດ້ລົງລາຍເຊັນໃຫ້ກັບ KFHP/H ກ່ຽວກັບການຈ່າຍເງິນໃດໜຶ່ງສໍາລັບການບໍລິການທີ່ສະໜອງໃຫ້ໂດຍ KFHP/H ທີ່ຄົນເຈັບໄດ້ຮັບຈາກບໍລິສັດປະກັນໄພຂອງຄົນເຈັບນັ້ນ.

**5.8.1.3 ຕາຕະລາງສ່ວນຫຼຸດ.** ຈໍານວນເງິນທີ່ KP ຮຽກເກັບຈາກຄົນເຈັບທີ່ມີເງື່ອນໄຂໄດ້ຮັບການຊ່ວຍເຫຼືອດ້ານການເງິນທາງການແພດແມ່ນອີງໃສ່ປະເພດເກນການມີສິດໄດ້ຮັບທີ່ນໍາມາໃຊ້ເພື່ອໃຫ້ຄົນເຈັບມີເງື່ອນໄຂໄດ້ຮັບໂຄງການ. ຂໍ້ມູນເພີ່ມຕື່ມກ່ຽວກັບສ່ວນຫຼຸດທີ່ມີໃຫ້ພາຍໃຕ້ນະໂຍບາຍແມ່ນໄດ້ສະຫຼຸບໄວ້ຢູ່ໃນພາກຜະໜວກທີ່ກ່ຽວຂ້ອງ. ເບິ່ງ*ພາກຜະໜວກ ສໍາລັບພື້ນທີ່ຕ່າງໆຂອງ Kaiser Permanente, ເອກະສານຄັດຕິດ 1-8.*

**5.8.1.3.1 ການຕັດສິນການມີສິດໄດ້ຮັບແບບສັນນິຖານ – ໄດ້ຜ່ານເງື່ອນໄຂມາກ່ອນແລ້ວ.** ຄົນເຈັບທີ່ໄດ້ຜ່ານເງື່ອນໄຂມາກ່ອນແລ້ວ (ຕາມທີ່ໄດ້ສະຫຼຸບໄວ້ໃນຂໍ້ 5.5.1) ສໍາລັບການມີສິດໄດ້ຮັບ MFA ຈະໄດ້ຮັບສ່ວນຫຼຸດ MFA 100% ຕໍ່ຄ່າໃຊ້ຈ່າຍຂອງຄົນເຈັບ ຫຼື

Proprietary Information. Kaiser Permanente. All rights reserved.
Publication, duplication, disclosure or use for any purpose not expressly authorized in writing is prohibited.
**Printed copies are for reference only. Please see electronic copy for latest approved version.**

ຄ່າບໍລິການຂອງຄົນເຈັບ ສໍາລັບການບໍລິການທີ່ໄດ້ສະໜອງໃຫ້ ເຊິ່ງຄົນເຈັບເປັນຜູ້ຮັບຜິດຊອບ.

**5.8.1.3.2 ການຕັດສິນການມີສິດໄດ້ຮັບແບບສັນນິຖານ ໂດຍ KP – ຍອດຄ້າງຊໍາລະທີ່ຈ່າຍດ້ວຍຕົນເອງ.** ຄົນເຈັບທີ່ບັນລຸໄດ້ຕາມເກນການທົດສອບແບບສະເລ່ຍ ຈະໄດ້ຮັບສ່ວນຫຼຸດຂອງ MFA ແບບເລື່ອນລະດັບ ຕໍ່ຄ່າໃຊ້ຈ່າຍຂອງຄົນເຈັບ ຫຼື ສ່ວນໜຶ່ງຂອງຄ່າບໍລິການທີ່ໄດ້ສະໜອງໃຫ້ທີ່ ຄົນເຈັບເປັນຜູ້ຮັບຜິດຊອບ.

**5.8.1.3.3 ການຕັດສິນການມີສິດໄດ້ຮັບແບບສັນນິຖານ ໂດຍ KP – ສິ່ງບົ່ງຊີ້ເຖິງຄວາມຫຍຸ້ງຍາກທາງດ້ານການເງິນ.** ຄົນເຈັບທີ່ບັນລຸໄດ້ຕາມເກນວ່າດ້ວຍສິ່ງບົ່ງຊີ້ເຖິງຄວາມຫຍຸ້ງຍາກທາງດ້ານການເງິນ ຈະໄດ້ຮັບສ່ວນຫຼຸດຂອງ MFA 100% ຕໍ່ຄ່າໃຊ້ຈ່າຍຂອງຄົນເຈັບ ຫຼື ສ່ວນໜຶ່ງຂອງຄ່າບໍລິການທີ່ໄດ້ສະໜອງໃຫ້ທີ່ ຄົນເຈັບເປັນຜູ້ຮັບຜິດຊອບ.

**5.8.1.3.4 ຄົນເຈັບບັນລຸໄດ້ຕາມເກນການທົດສອບແບບສະເລ່ຍ.** ຄົນເຈັບ ທີ່ບັນລຸໄດ້ຕາມເກນການທົດສອບແບບສະເລ່ຍ ຈະໄດ້ຮັບສ່ວນຫຼຸດຂອງ MFA ແບບເລື່ອນລະດັບ ຕໍ່ຄ່າໃຊ້ຈ່າຍຂອງຄົນເຈັບ ຫຼື ສ່ວນໜຶ່ງຂອງຄ່າບໍລິການທີ່ໄດ້ສະໜອງໃຫ້ທີ່ ຄົນເຈັບເປັນຜູ້ຮັບຜິດຊອບ.

Proprietary Information. Kaiser Permanente. All rights reserved.
Publication, duplication, disclosure or use for any purpose not expressly authorized in writing is prohibited.
**Printed copies are for reference only. Please see electronic copy for latest approved version.**

**5.8.1.3.5 ຄົນເຈັບທີ່ບັນລຸໄດ້ຕາມເກນການມີສິດໄດ້ຮັບຄ່າໃຊ້ຈ່າຍທາງການແພດໃນລະດັບສູງ.** ຄົນເຈັບທີ່ບັນລຸໄດ້ຕາມເກນການມີສິດໄດ້ຮັບຄ່າໃຊ້ຈ່າຍທາງການແພດໃນລະດັບສູງຈະໄດ້ຮັບສ່ວນຫຼຸດຂອງ MFA 100% ຕໍ່ຄ່າໃຊ້ຈ່າຍຂອງຄົນເຈັບ ຫຼື ສ່ວນໜຶ່ງຂອງຄ່າບໍລິການທີ່ໄດ້ສະໜອງໃຫ້ທີ່ຄົນເຈັບເປັນຜູ້ຮັບຜິດຊອບ.

**5.8.1.4 ການເບີກເງິນຄືນຈາກການລະງັບຂໍ້ພິດພາດ.** KFHP/H ຈະດຳເນີນການເບີກເງິນຄືນຈາກການລະງັບຂໍ້ພິດພາດສຳລັບຄວາມຮັບຜິດຊອບຂອງບຸກຄົນທີສາມ / ການຄຸ້ມຄອງການປະກັນໄພສ່ວນຕົວ, ຜູ້ຈ່າຍເງິນ ຫຼື ຝ່າຍທີ່ຮັບຜິດຊອບທາງກົດໝາຍອື່ນໆ ຕາມທີ່ກ່ຽວຂ້ອງ.

**5.8.2 ໄລຍະເວລາການມີສິດໄດ້ຮັບລາງວັນ.** ໄລຍະເວລາການມີສິດໄດ້ຮັບການບໍລິການຕິດຕາມຜົນແມ່ນເລີ່ມຕົ້ນຈາກວັນທີອະນຸມັດ ຫຼື ວັນທີໃຫ້ການບໍລິການ ຫຼື ວັນທີເບີກຈ່າຍຢາ. ຊ່ວງເວລາຂອງໄລຍະເວລາການມີສິດໄດ້ຮັບແມ່ນໄລຍະເວລາທີ່ມີຂີດຈຳກັດເທົ່ານັ້ນ ແລະ ຖືກກຳນົດຕາມດຸນພິນິດຂອງ KP ໃນຫຼາຍວິທີທາງ, ໄດ້ແກ່:

**5.8.2.1 ໄລຍະເວລາສະເພາະ.** ສູງສຸດ 365 ວັນ ສຳລັບການບໍລິການຕິດຕາມຜົນ ທີ່ມີສິດໄດ້ຮັບ ແລະ ຍອດຄ່າໃຊ້ຈ່າຍຂອງຄົນເຈັບທີ່ຍັງຄ້າງຊຳລະທີ່ລະບຸກ່ອນການນຳສົ່ງຕໍ່ໜີ້ເສຍ.

**5.8.2.2 ການພະຍາບານທີ່ມີຄວາມຊຳນິຊຳນານ, ການບໍລິການຄວບຄຸມດູແລ ແລະ ການດູແລລະດັບປານກາງ.** ສູງສຸດ 30 ວັນ ສຳລັບການບໍລິການທີ່ສະໜອງໃຫ້ຢູ່ນອກ KP.

**5.8.2.3 ອຸປະກອນການແພດທີ່ທົນທານ.** ສູງສຸດ 180 ວັນ ສຳລັບຜູ້ຂາຍທີ່ສະໜອງອຸປະກອນການແພດ.

Proprietary Information. Kaiser Permanente. All rights reserved.
Publication, duplication, disclosure or use for any purpose not expressly authorized in writing is prohibited.
**Printed copies are for reference only. Please see electronic copy for latest approved version.**

**5.8.2.4 ຊ່ວງເວລາຂອງການປິ່ນປົວ ຫຼື ຕອນຂອງການເບິ່ງແຍງດູແລ.** ສູງສຸດ 180 ວັນ ສໍາລັບຊ່ວງເວລາຂອງການປິ່ນປົວ ແລະ/ຫຼື ຕອນຂອງການເບິ່ງແຍງດູແລ ຕາມທີ່ກໍານົດໂດຍຜູ້ໃຫ້ບໍລິການຂອງ KP.

**5.8.2.5 ການຍື່ນຄໍາຮ້ອງຂໍການຊ່ວຍເຫຼືອດ້ານການເງິນຄືນໃໝ່.** ເລີ່ມຕັ້ງແຕ່ ສາມສິບ (30) ວັນ ກ່ອນວັນໝົດອາຍຸຂອງລາງວັນທີ່ມີຢູ່ແລ້ວ ແລະ ເມື່ອໃດກໍໄດ້ຫຼັງຈາກນັ້ນ, ຄົນເຈັບສາມາດຈະຍື່ນຄໍາຮ້ອງຂໍໂຄງການຄືນໃໝ່ໄດ້.

**5.8.3 ການຖອນ, ລຶບລ້າງ ຫຼື ດັດແກ້ລາງວັນ.** KFHP/H ອາດຈະຖອນ, ລຶບລ້າງ ຫຼື ດັດແກ້ລາງວັນ MFA, ໃນບາງສະຖານະການ ຕາມດູນພິນິດຂອງຕົນ. ສະຖານະການຕ່າງໆ ປະກອບດ້ວຍ:

**5.8.3.1 ການສໍ້ໂກງ, ການລັກ ຫຼື ການປ່ຽນແປງທາງດ້ານການເງິນ.** ໃນກໍລະນີເປັນການສໍ້ໂກງ, ການບິດເບືອນຄວາມຈິງ, ການລັກ, ການປ່ຽນແປງສະຖານະການທາງດ້ານການເງິນຂອງຄົນເຈັບ ຫຼື ສະຖານະການອື່ນໆ ທີ່ທໍາລາຍຄວາມຊື່ສັດຂອງໂຄງການ MFA.

**5.8.3.2 ມີສິດໄດ້ຮັບບັນດາໂຄງການຄຸ້ມຄອງສຸຂະພາບຂອງລັດ ແລະ ເອກະຊົນ.** ຄົນເຈັບທີ່ໄດ້ຮັບການຄັດກອງເຂົ້າຮັບບັນດາໂຄງການຄຸ້ມຄອງສຸຂະພາບຂອງລັດ ແລະ ເອກະຊົນ ແມ່ນຖືວ່າມີສິດໄດ້ຮັບ ແຕ່ບໍ່ໄດ້ຮ່ວມກັນກັບຂັ້ນຕອນການສະໝັກສໍາລັບໂຄງການເຫຼົ່ານັ້ນ.

**5.8.3.3 ແຫຼ່ງການຈ່າຍເງິນອື່ນໆທີ່ລະບຸ.** ການຄຸ້ມຄອງສຸຂະພາບ ຫຼື ແຫຼ່ງການຈ່າຍເງິນອື່ນໆທີ່ລະບຸໄວ້

Proprietary Information. Kaiser Permanente. All rights reserved.
Publication, duplication, disclosure or use for any purpose not expressly authorized in writing is prohibited.
**Printed copies are for reference only. Please see electronic copy for latest approved version.**

ຫຼັງຈາກຄົນເຈັບໄດ້ຮັບລາງວັນ MFA ຈະເຮັດໃຫ້ຄ່າບໍລິການສຳລັບການບໍລິການທີ່ມີສິດໄດ້ຮັບຖືກຮຽກເກັບເງິນຄືນ. ຖ້າກໍລະນີນີ້ເກີດຂຶ້ນ, ຄົນເຈັບຈະບໍ່ໄດ້ຖືກຮຽກເກັບເງິນສຳລັບສ່ວນນັ້ນຂອງໃບບິນ (1) ທີ່ຄົນເຈັບຕ້ອງຮັບຜິດຊອບດ້ວຍຕົນເອງ ແລະ (2) ເຊິ່ງບໍ່ໄດ້ຮັບການຈ່າຍໂດຍການຄຸ້ມຄອງສຸຂະພາບ ຫຼື ແຫຼ່ງການຈ່າຍເງິນອື່ນໆຂອງເຂົາເຈົ້າ.

**5.8.3.4 ການປ່ຽນແປງການຄຸ້ມຄອງສຸຂະພາບ.** ຄົນເຈັບທີ່ປະສົບກັບການປ່ຽນແປງໃນການຄຸ້ມຄອງການເບິ່ງແຍງດູແລສຸຂະພາບ ຈະຖືກຮ້ອງຂໍໃຫ້ຍື່ນຄຳຮ້ອງຂໍໂຄງການ MFA ຄືນໃໝ່.

**5.8.3.5 ການປ່ຽນແປງລາຍໄດ້ຂອງຄົວເຮືອນ.** ຄົນເຈັບທີ່ປະສົບກັບການປ່ຽນແປງລາຍຮັບຂອງຄົວເຮືອນ ຈະຖືກຮ້ອງຂໍໃຫ້ຍື່ນຄຳຮ້ອງຂໍໂຄງການ MFA ຄືນໃໝ່.

**5.9 ຂໍ້ຈຳກັດກ່ຽວກັບຄ່າບໍລິການ.** ຫ້າມບໍ່ໃຫ້ຮຽກເກັບຄ່າບໍລິການຈາກຄົນເຈັບທີ່ມີສິດໄດ້ຮັບ MFA ເຕັມຈຳນວນ (ເຊັ່ນ: ຄ່າບໍລິການລວມ) ສຳລັບຄ່າບໍລິການໂຮງໝໍທີ່ມີສິດໄດ້ຮັບ ທີ່ສະເໜີໃຫ້ຢູ່ໂຮງໝໍ Kaiser Foundation Hospital. ຄົນເຈັບທີ່ໄດ້ຮັບການບໍລິການຂອງໂຮງໝໍທີ່ມີສິດໄດ້ຮັບ ຢູ່ໂຮງໝໍ Kaiser Foundation Hospital ແລະ ມີສິດໄດ້ຮັບໂຄງການ MFA ແຕ່ບໍ່ໄດ້ຮັບລາງວັນ MFA ຫຼື ຖືກປະຕິເສດລາງວັນ MFA, ຈະບໍ່ຖືກຮຽກເກັບຄ່າບໍລິການຫຼາຍກວ່າຈຳນວນທີ່ຮຽກເກັບໂດຍທົ່ວໄປ (AGB) ສຳລັບການບໍລິການເຫຼົ່ານັ້ນ.

**5.9.1 ຈຳນວນເງິນທີ່ຖືກຮຽກເກັບເງິນໂດຍທົ່ວໄປ.** ຈຳນວນເງິນທີ່ຖືກຮຽກເກັບໂດຍທົ່ວໄປ (AGB) ສຳລັບການເບິ່ງແຍງດູແລສຸກເສີນ ຫຼື ຈຳເປັນທາງການແພດອື່ນໆ ໃຫ້ແກ່ບຸກຄົນທີ່ມີປະກັນໄພຄຸ້ມຄອງການເບິ່ງແຍງດູແລດັ່ງກ່າວ ແມ່ນໄດ້ຮັບການກຳນົດສຳລັບສະຖານທີ່ບໍລິການຂອງ KP ຕາມທີ່ອະທິບາຍໄວ້ໃນຂໍ້ VII

Proprietary Information. Kaiser Permanente. All rights reserved.
Publication, duplication, disclosure or use for any purpose not expressly authorized in writing is prohibited.
Printed copies are for reference only. Please see electronic copy for latest approved version.

ຂອງພາກພະໜວກສະເພາະພາກພື້ນທີ່ກ່ຽວຂ້ອງ. ເບິ່ງ*ພາກພະໜວກ ສໍາລັບພື້ນທີ່ຕ່າງໆຂອງ Kaiser Permanente, ເອກະສານຄັດຕິດ 1-8*.

**5.10 ການດໍາເນີນການເກັບໜີ້**

**5.10.1 ຄວາມພະຍາຍາມແຈ້ງການທີ່ສົມເຫດສົມຜົນ.** KFHP/H ຫຼື ໜ່ວຍງານເກັບໜີ້ສິນ ທີ່ເຮັດໜ້າທີ່ໃນນາມຂອງຕົນ ຈະໃຊ້ຄວາມຄວາມພະຍາຍາມທີ່ສົມເຫດສົມຜົນ ເພື່ອແຈ້ງໃຫ້ຄົນເຈັບທີ່ມີຍອດກາຍກໍານົດ ຫຼື ຍອດຄ້າງຊໍາລະຮັບຊາບ ກ່ຽວກັບໂຄງການ MFA. ຄວາມພະຍາຍາມແຈ້ງການທີ່ສົມເຫດສົມຜົນ ປະກອບດ້ວຍ:

**5.10.1.1** ການອອກແຈ້ງການເປັນລາຍລັກອັກສອນພາຍໃນ 120 ວັນ ນັບຈາກວັນອອກໃບແຈ້ງຫນີ້ຈາກອອກໂຮງໝໍຄັ້ງທໍາອິດ ທີ່ແຈ້ງໃຫ້ເຈົ້າຂອງບັນຊີຮູ້ວ່າ ມີ MFA ໃຫ້ຜູ້ທີ່ມີເງື່ອນໄຂ.

**5.10.1.2** ການອອກແຈ້ງການເປັນລາຍລັກອັກສອນ ພ້ອມກັບບັນຊີລາຍການສໍາລັບການດໍາເນີນການເກັບໜີ້ພິເສດ (ECAs) ທີ່ KFHP/H ຫຼື ໜ່ວຍງານເກັບໜີ້ສິນຕັ້ງໃຈຈະລິເລີ່ມການຊໍາລະຍອດຄ່າໃຊ້ຈ່າຍຂອງຄົນເຈັບ ແລະ ກໍານົດເວລາສໍາລັບການດໍາເນີນການດັ່ງກ່າວ, ເຊິ່ງຈະບໍ່ເກີນ 30 ວັນ ນັບຈາກວັນອອກແຈ້ງການເປັນລາຍລັກອັກສອນ.

**5.10.1.3** ການໃຫ້ບົດສະຫຼຸບທີ່ເປັນພາສາທໍາມະດາ ຂອງນະໂຍບາຍ MFA ພ້ອມກັບຄໍາຖະແຫຼງຂອງຄົນເຈັບໃນໂຮງໝໍສະບັບທໍາອິດ.

**5.10.1.4** ການພະຍາຍາມແຈ້ງໃຫ້ຜູ້ຖືບັນຊີທາງປາກເປົ່າ ກ່ຽວກັບນະໂຍບາຍ MFA ແລະ

Proprietary Information. Kaiser Permanente. All rights reserved.
Publication, duplication, disclosure or use for any purpose not expressly authorized in writing is prohibited.
**Printed copies are for reference only. Please see electronic copy for latest approved version.**

ວິທີການໄດ້ຮັບຄວາມຊ່ວຍເຫຼືອຜ່ານຂະບວນການສະໝັກຂໍ MFA.

**5.10.1.5** ການກຳນົດການມີສິດໄດ້ຮັບໂຄງການຕາມຄຳຮ້ອງຂໍ, ກ່ອນທີ່ຍອດທີ່ກາຍກຳນົດ ຫຼື ຍອດຄ້າງຊຳລະຂອງຄົນເຈັບຈະຖືກໂອນໄປໃຫ້ໜ່ວຍງານເກັບໜີ້ສິນ.

**5.10.2 ການດຳເນີນການເກັບໜີ້ພິເສດທີ່ຖືກລະງັບ.** KFHP/H ບໍ່ໄດ້ດຳເນີນການ ຫຼື ອະນຸຍາດໃຫ້ໜ່ວຍງານເກັບໜີ້ສິນດຳເນີນການໃນນາມຂອງຕົນ, ດຳເນີນການເກັບໜີ້ພິເສດ (ECAs) ຈາກຄົນເຈັບ ຖ້າຫາກວ່າຄົນເຈັບ:

**5.10.2.1** ມີລາງວັນ MFA ທີ່ຍັງມີຜົນບັງຄັບໃຊ້ຢູ່ ຫຼື

**5.10.2.2** ໄດ້ລິເລີ່ມຄຳຮ້ອງຂໍສະໝັກ MFA ຫຼັງຈາກ ECAs ໄດ້ເລີ່ມຕົ້ນແລ້ວ. ECAs ຈະຖືກລະງັບໄວ້ຈົນກວ່າຈະມີການກຳນົດການມີສິດໄດ້ຮັບຂັ້ນສຸດທ້າຍ.

**5.10.3 ການດຳເນີນການເກັບໜີ້ພິເສດທີ່ອະນຸຍາດ.**

**5.10.3.1 ການຕັດສິນໃຈຂັ້ນສຸດທ້າຍຂອງຄວາມພະຍາຍາມທີ່ສົມເຫດສົມຜົນ.** ກ່ອນທີ່ຈະລິເລີ່ມ ECAs ໃດໆ, ຜູ້ນຳດ້ານການບໍລິການທາງດ້ານການເງິນຂອງຄົນເຈັບຕາມຮອບວຽນລາຍຮັບ ໃນພາກພື້ນ ຈະຮັບປະກັນສິ່ງຕໍ່ໄປນີ້:

**5.10.3.1.1** ການດຳເນີນຄວາມພະຍາຍາມທີ່ສົມເຫດສົມຜົນເພື່ອແຈ້ງໃຫ້ຄົນເຈັບຮັບຊາບກ່ຽວກັບໂຄງການ MFA ໃຫ້ສຳເລັດ ແລະ

**5.10.3.1.2** ຄົນເຈັບໄດ້ຮັບເວລາຢ່າງໜ້ອຍ 240 ວັນ

Proprietary Information. Kaiser Permanente. All rights reserved.
Publication, duplication, disclosure or use for any purpose not expressly authorized in writing is prohibited.
**Printed copies are for reference only. Please see electronic copy for latest approved version.**

ນັບຈາກວັນອອກໃບແຈ້ງຍອດຮຽກເກັບເງິນຄັ້ງທຳອິດ ເພື່ອຍື່ນຄຳຮ້ອງຂໍ MFA.

**5.10.3.2 ການລາຍງານໃຫ້ໜ່ວຍງານຄຸ້ມຄອງສິນເຊື່ອຜູ້ບໍລິໂພກ ຫຼື ສຳນັກງານສິນເຊື່ອ.** KFHP/H ຫຼື ໜ່ວຍງານເກັບໜີ້ສິນ ທີ່ເຮັດໜ້າທີ່ໃນນາມຂອງຕົນ ອາດຈະລາຍງານຂໍ້ມູນທີ່ບໍ່ເພິ່ງປະສົງຕໍ່ໜ່ວຍງານລາຍງານສິນເຊື່ອຜູ້ບໍລິໂພກ ຫຼື ສຳນັກງານສິນເຊື່ອ.

**5.10.3.3 ການດຳເນີນການທາງຕຸລາການ ຫຼື ທາງແພ່ງ.** ກ່ອນທີ່ຈະດຳເນີນທາງຕຸລາການ ຫຼື ທາງແພ່ງ, KFHP/H ຈະກວດສອບສະຖານະທາງດ້ານການເງິນຂອງຄົນເຈັບ ໂດຍໃຊ້ແຫຼ່ງຂໍ້ມູນພາຍນອກ ເພື່ອກຳນົດວ່າຄົນເຈັບມີສິດໄດ້ຮັບໂຄງການ MFA ຫຼື ບໍ່.

**5.10.3.3.1 ມີສິດໄດ້ຮັບ MFA.** ຈະບໍ່ມີການດຳເນີນການເພີ່ມຕື່ມຕໍ່ຄົນເຈັບທີ່ມີສິດໄດ້ຮັບໂຄງການ MFA. ບັນດາບັນຊີທີ່ມີເງື່ອນໄຂໄດ້ຮັບ MFA ແມ່ນຈະຖືກຍົກເລີກ ແລະ ສົ່ງຄືນແບບຍ້ອນຫຼັງ.

**5.10.3.3.2 ບໍ່ມີສິດໄດ້ຮັບ MFA.** ໃນກໍລະນີທີ່ຈຳກັດຫຼາຍ, ການດຳເນີນການຕໍ່ໄປນີ້ອາດຈະສາມາດດຳເນີນການໄດ້ ໂດຍໄດ້ຮັບການອະນຸມັດກ່ອນຈາກຫົວໜ້າເຈົ້າໜ້າທີ່ດ້ານການເງິນ ຫຼື ຜູ້ຄວບຄຸມລະດັບພາກພື້ນ:

**5.10.3.3.2.1** ການອາຍັດຄ່າຈ້າງ

Proprietary Information. Kaiser Permanente. All rights reserved.
Publication, duplication, disclosure or use for any purpose not expressly authorized in writing is prohibited.
**Printed copies are for reference only. Please see electronic copy for latest approved version.**

**5.10.3.3.2.2** **ການຟ້ອງຮ້ອງ/ການດຳເນີນຄະດີແພ່ງ.** ການດຳເນີນຄະດີຕາມກົດໝາຍແມ່ນຈະບໍ່ດຳເນີນຕໍ່ບຸກຄົນທີ່ຫວ່າງງານ ແລະ ບໍ່ມີລາຍຮັບທີ່ສຳຄັນອື່ນໆ.

**5.10.3.3.2.3** ການຍຶດທີ່ຢູ່ອາໄສ.

**5.10.4** **ການດຳເນີນການເກັບໜີ້ພິເສດທີ່ເກືອດຫ້າມ.** KFHP/H ບໍ່ປະຕິບັດ, ອະນຸຍາດ ຫຼື ອະນຸຍາດໃຫ້ໜ່ວຍງານເກັບໜີ້ສິນປະຕິບັດການດຳເນີນການດັ່ງຕໍ່ໄປນີ້ ພາຍໃຕ້ສະພາບການໃດກໍຕາມ:

**5.10.4.1** ເລື່ອນ ຫຼື ປະຕິເສດການເບິ່ງແຍງດູແລ ເນື່ອງຈາກຜູ້ຖືບັນຊີບໍ່ຊຳລະຍອດເງິນໃນກ່ອນໜ້ານີ້ ຫຼື ຮຽກຮ້ອງໃຫ້ຈ່າຍເງິນກ່ອນການໃຫ້ການເບິ່ງແຍງດູແລສຸກເສີນ ຫຼື ທີ່ຈຳເປັນທາງການແພດ.

**5.10.4.2** ຂາຍໜີ້ສິນຂອງຜູ້ຖືບັນຊີໃຫ້ບຸກຄົນທີສາມ.

**5.10.4.3** ການຍຶດຊັບສິນ ຫຼື ການອາຍັດບັນຊີ.

**5.10.4.4** ຂໍໝາຍຈັບ.

**5.10.4.5** ຮ້ອງຂໍໝາຍພາຕົວ.

**5.11** **ການຕອບໂຕ້ໄພພິບັດ ແລະ ພາວະສຸກເສີນດ້ານສາທາລະນະສຸກ.** KFHP/H ອາດຈະດັດແກ້ເກນການມີສິດໄດ້ຮັບ ແລະ ຂັ້ນຕອນການສະໝັກຂໍໂຄງການ MFA ຂອງຕົນຊົ່ວຄາວ ເພື່ອຍົກລະດັບການຊ່ວຍເຫຼືອທີ່ມີໃຫ້ແກ່ຊຸມຊົນ ແລະ ຄົນເຈັບທີ່ໄດ້ຮັບຜົນກະທົບຈາກເຫດການທີ່ຮູ້ຈັກກັນດີ

Proprietary Information. Kaiser Permanente. All rights reserved.
Publication, duplication, disclosure or use for any purpose not expressly authorized in writing is prohibited.
**Printed copies are for reference only. Please see electronic copy for latest approved version.**

ທີ່ຖືວ່າເປັນໄພພິບັດ ຫຼື ພາວະສຸກເສີນດ້ານສາທາລະນະສຸກ ໂດຍລັດ ຫຼື ລັດຖະບານກາງ.

**5.11.1 ການດັດແກ້ການມີສິດໄດ້ຮັບທີ່ເປັນໄປໄດ້.** ການປ່ຽນແປງເກນການມີສິດໄດ້ຮັບ MFA ຊົ່ວຄາວ ອາດປະກອບດ້ວຍ:

**5.11.1.1** ການລະງັບຂໍ້ຈຳກັດກ່ຽວກັບການມີສິດໄດ້ຮັບ.

**5.11.1.2** ການເພີ່ມມາດຕະຖານເກນການທົດສອບແບບສະເລ່ຍ.

**5.11.1.3** ການຫຼຸດມາດຕະຖານເກນການໄດ້ຮັບລາຍຈ່າຍທາງການແພດລະດັບສູງລົງ.

**5.11.2 ການດັດແກ້ຂະບວນການສະໝັກທີ່ເປັນໄປໄດ້.** ການປ່ຽນແປງຂະບວນການສະໝັກ MFA ຊົ່ວຄາວຕໍ່ ອາດຈະປະກອບດ້ວຍ:

**5.11.2.1** ການອະນຸຍາດໃຫ້ຄົນເຈັບສະໜອງຂໍ້ມູນທາງດ້ານການເງິນພື້ນຖານ (ເຊັ່ນ: ລາຍຮັບ, ຖ້າມີ ແລະ ແຫຼ່ງທີ່ມາ) ແລະ ຢັ້ງຢືນຄວາມຖືກຕ້ອງຂອງມັນ ເມື່ອ (1) ບໍ່ສາມາດກວດສອບສະຖານະທາງດ້ານການເງິນຂອງເຂົາເຈົ້າໄດ້ ໂດຍໃຊ້ແຫຼ່ງຂໍ້ມູນພາຍນອກ, (2) ບໍ່ມີຂໍ້ມູນທາງດ້ານການເງິນທີ່ຮ້ອງຂໍເນື່ອງຈາກເຫດການ, ແລະ (3) ບໍ່ມີຫຼັກຖານອື່ນໆ ທີ່ສາມາດຈະສະແດງໃຫ້ເຫັນເຖິງການມີສິດໄດ້ຮັບ.

**5.11.2.2** ການພິຈາລະນາຜົນກະທົບຂອງການສູນເສຍຄ່າຈ້າງ/ການຈ້າງງານໃນອະນາຄົດ ອັນເນື່ອງມາຈາກເຫດການໃນເວລາກຳນົດລາຍຮັບຂອງຄົວເຮືອນ.

**5.11.3 ຂໍ້ມູນທີ່ມີໃຫ້ແກ່ສາທາລະນະ.** ຂໍ້ມູນທີ່ອະທິບາຍເຖິງການປ່ຽນແປງຕໍ່ໂຄງການ MFA ຊົ່ວຄາວ ແມ່ນມີໃຫ້ສາທາລະນະ ຢູ່ໃນໜ້າເວັບຂອງໂຄງການ MFA ແລະ

Proprietary Information. Kaiser Permanente. All rights reserved.
Publication, duplication, disclosure or use for any purpose not expressly authorized in writing is prohibited.
**Printed copies are for reference only. Please see electronic copy for latest approved version.**

ຢູ່ສະຖານການປິ່ນປົວຂອງ KP ແຫ່ງຕ່າງໆ
ໃນພື້ນທີ່ທີ່ໄດ້ຮັບຜົນກະທົບ.

## 6.0 ເອກະສານຊ້ອນທ້າຍ/ເອກະສານອ້າງອີງ

### 6.1 ເອກະສານຊ້ອນທ້າຍ

**6.1.1** ເອກະສານຊ້ອນທ້າຍ A – ປະມວນຄຳສັບ

### 6.2 ເອກະສານຄັດຕິດ

**6.2.1** ເອກະສານຄັດຕິດ 1 – ພາກຜະໜວກ ສຳລັບ Kaiser Permanente Colorado

**6.2.2** ເອກະສານຄັດຕິດ 2 – ພາກຜະໜວກ ສຳລັບ Kaiser Permanente Georgia

**6.2.3** ເອກະສານຄັດຕິດ 3 – ພາກຜະໜວກ ສຳລັບ Kaiser Permanente Hawaii

**6.2.4** ເອກະສານຄັດຕິດ 4 – ພາກຜະໜວກ ສຳລັບ Kaiser Permanente ບັນດາລັດມະຫາສະໝຸດແອດແລນຕິກຕອນກາງ

**6.2.5** ເອກະສານຄັດຕິດ 5 – ພາກຜະໜວກ ສຳລັບ Kaiser Permanente ພາກເໜືອ California

**6.2.6** ເອກະສານຄັດຕິດ 6 – ພາກຜະໜວກ ສຳລັບ Kaiser Permanente ພາກຕາເວັນຕົກສ່ຽງເໜືອ

**6.2.7** ເອກະສານຄັດຕິດ 7 – ພາກຜະໜວກ ສຳລັບ Kaiser Permanente ພາກໃຕ້ California

**6.2.8** ເອກະສານຄັດຕິດ 8 – ພາກຜະໜວກ ສຳລັບ Kaiser Permanente Washington

### 6.3 ເອກະສານອ້າງອີງ

**6.3.1** Patient Protection and Affordable Care Act (ກົດໝາຍວ່າດ້ວຍການປົກປ້ອງຄົນເຈັບ ແລະ

Proprietary Information. Kaiser Permanente. All rights reserved.
Publication, duplication, disclosure or use for any purpose not expressly authorized in writing is prohibited.
**Printed copies are for reference only. Please see electronic copy for latest approved version.**

ການເບິ່ງແຍງດູແລລາຄາຖືກ), Public Law (ກົດໝາຍສາທາລະນະ) 111-148 (124 Stat. 119 (2010))

**6.3.2** ຫ້ອງການທະບຽນຂອງລັດຖະບານກາງ ແລະ ຄຳແນະນຳວ່າດ້ວຍຄວາມທຸກຍາກຂອງລັດຖະບານກາງປະຈຳປີ

**6.3.3** ຈົດໝາຍພິມເຜີຍແຜ່ຂອງ Internal Revenue Service (ອົງການບໍລິການລາຍຮັບພາຍໃນ), ຄຳແນະນຳສຳລັບຕາຕະລາງ H ປີ 2014 (ແບບຟອມ 990)

**6.3.4** ແຈ້ງການຂອງ Internal Revenue Service (ອົງການບໍລິການລາຍຮັບພາຍໃນ) 2010-39

**6.3.5** ປະມວນກົດໝາຍຂອງ Internal Revenue Service (ອົງການບໍລິການລາຍຮັບພາຍໃນ), 26 CFR ພາກ 1, 53 ແລະ 602, RIN 1545-BK57;
RIN 1545-BL30; RIN 1545-BL58 – ຂໍ້ກຳນົດເພີ່ມຕື່ມສຳລັບໂຮງໝໍ
ການກຸສົນ

**6.3.6** ສະມາຄົມໂຮງໝໍລັດຄາລິຟໍເນຍ - ບັນດານະໂຍບາຍວ່າດ້ວຍການຊ່ວຍເຫຼືອທາງດ້ານການເງິນຂອງໂຮງໝໍ ແລະ ກົດໝາຍວ່າດ້ວຍສິດທິປະໂຫຍດສຳລັບຊຸມຊົນ, ສະບັບປີ 2015

**6.3.7** ສະມາຄົມສຸຂະພາບກາໂຕລິກແຫ່ງສະຫະລັດ - ຄູ່ມືສຳລັບການວາງແຜນ ແລະ ການລາຍງານສິດທິປະໂຫຍດສຳລັບຊຸມຊົນ, ສະບັບປີ 2012

**6.3.8** ລາຍຊື່ຜູ້ໃຫ້ບໍລິການ. ລາຍຊື່ຜູ້ໃຫ້ບໍລິການ ແມ່ນມີຢູ່ໃນເວັບໄຊຂອງ KFHP/H
ສຳລັບ:

**6.3.8.1** Kaiser Permanente ປະຈຳ Hawaii (www.kp.org/mfa/hawaii [ເປັນພາສາອັງກິດ])

Proprietary Information. Kaiser Permanente. All rights reserved.
Publication, duplication, disclosure or use for any purpose not expressly authorized in writing is prohibited.
**Printed copies are for reference only. Please see electronic copy for latest approved version.**

**6.3.8.2** Kaiser Permanente ປະຈຳພາກຕາເວັນຕົກສ່ຽງເໜືອ (www.kp.org/mfa/nw [ເປັນພາສາອັງກິດ])

**6.3.8.3** Kaiser Permanente ປະຈຳພາກເໜືອ California (www.kp.org/mfa/ncal [ເປັນພາສາອັງກິດ])

**6.3.8.4** Kaiser Permanente ປະຈຳພາກໃຕ້ California (www.kp.org/mfa/scal [ເປັນພາສາອັງກິດ])

**6.3.8.5** Kaiser Permanente ປະຈຳ Washington (www.kp.org/mfa/wa [ເປັນພາສາອັງກິດ])

Proprietary Information. Kaiser Permanente. All rights reserved.
Publication, duplication, disclosure or use for any purpose not expressly authorized in writing is prohibited.
**Printed copies are for reference only. Please see electronic copy for latest approved version.**

## ເອກະສານຊ້ອນທ້າຍ A – ປະມວນຄຳສັບ

**Community MFA (CMFA) –** ໂຄງການຊ່ວຍເຫຼືອດ້ານການເງິນທາງການແພດທີ່ວາງແຜນໄວ້ທີ່ຮ່ວມມືກັບບັນດາອົງການຈັດຕັ້ງໃນຊຸມຊົນ ແລະ ຕາຂ່າຍຄວາມປອດໄພ ເພື່ອໃຫ້ການເຂົ້າເຖິງການເບິ່ງແຍງດູແລທີ່ຈຳເປັນທາງດ້ານການແພດໃຫ້ແກ່ຄົນເຈັບທີ່ມີລາຍໄດ້ຕ່ຳທີ່ບໍ່ມີປະກັນໄພ ແລະ ມີປະກັນໄພມູນຄ່າຕ່ຳ ຢູ່ສະຖານບໍລິການແຫ່ງຕ່າງໆຂອງ KP.

**ໜ່ວຍງານເກັບກູ້ໜີ້ສິນ** – ບຸກຄົນ ຫຼື ອົງການຈັດຕັ້ງທີ່ກະທຳ, ດຳເນີນການ ຫຼື ປະຕິບັດການເກັບກູ້ໜີ້ສິນໂດຍທາງກົງ ຫຼື ທາງອ້ອມ ຫຼື ພະຍາຍາມເກັບໜີ້ສິນທີ່ຕິດຄ້າງ ຫຼື ຖືກກ່າວຫາວ່າເປັນໜີ້ຕໍ່ເຈົ້າໜີ້ ຫຼື ຜູ້ຊື້ໜີ້ສິນ.

**ອຸປະກອນການແພດທີ່ທົນທານ (DME)** – ລວມທັງ, ແຕ່ບໍ່ຈຳກັດພຽງແຕ່: ໄມ້ເທົ້າມາດຕະຖານ, ໄມ້ຄ້ຳ, ເຄື່ອງພົ່ນຢາ, ເຄື່ອງໃຊ້ທີ່ມີປະໂຫຍດສະເພາະດ້ານ, ອຸປະກອນຈ່ອງດຶງປະຕູເພື່ອໃຊ້ໃນເຮືອນ, ລໍ້ນັ່ງຄົນເຈັບ, ເຄື່ອງຊ່ວຍຍ່າງ, ຕຽງໂຮງໝໍ ແລະ ອົກຊີແຊນ ສຳລັບໃຊ້ໃນເຮືອນຕາມທີ່ກຳນົດໄວ້ໃນເກນວ່າດ້ວຍ DME. DME ບໍ່ລວມກາຍອຸປະກອນ, ອົງຄະທຽມ (ເຊັ່ນ: ເຝືອກຕໍ່ກະດູກ/ອຸປະກອນພະຍຸງແບບເຄື່ອນໄຫວ ແລະ ກ່ອງສຽງທຽມ ແລະ ເຄື່ອງໃຊ້ຕ່າງໆ) ແລະ ເຄື່ອງໃຊ້ທີ່ສາມາດຫາຊື້ໄດ້ຕາມຮ້ານຂາຍຢາທົ່ວໄປ ແລະ ສິນຄ້າທີ່ຈັບຕ້ອງບໍ່ໄດ້ (ເຊັ່ນ: ເຄື່ອງໃຊ້ລະບົບທາງເດີນປັດສະວະ ແລະ ເຄື່ອງໃຊ້ສຳລັບບາດແຜ).

**ຄົນເຈັບທີ່ມີສິດໄດ້ຮັບ –** ບຸກຄົນທີ່ບັນລຸໄດ້ຕາມເກນການມີສິດໄດ້ຮັບທີ່ໄດ້ອະທິບາຍໄວ້ໃນນະໂຍບາຍສະບັບນີ້, ບໍ່ວ່າຄົນເຈັບຈະ (1) ບໍ່ມີປະກັນໄພ; (2) ໄດ້ຮັບການຄຸ້ມຄອງຜ່ານໂຄງການຂອງລັດ (ເຊັ່ນ: Medicare, Medicaid ຫຼື ການຄຸ້ມຄອງດ້ານການເບິ່ງແຍງດູແລສຸຂະພາບແບບໄດ້ຮັບເງິນອຸດໜູນທີ່ຊື້ຜ່ານຕະຫຼາດປະກັນໄພສຸຂະພາບ); (3) ມີປະກັນໄພຈາກແຜນປະກັນສຸຂະພາບອື່ນນອກເໜືອຈາກ KFHP ຫຼື (4) ໄດ້ຮັບການຄຸ້ມຄອງໂດຍ KFHP.

**ແຫຼ່ງຂໍ້ມູນພາຍນອກ** – ຂໍ້ມູນທີ່ບັນດາຜູ້ຂາຍບຸກຄົນທີສາມ ນຳມາໃຊ້ເພື່ອກວດສອບຂໍ້ມູນສ່ວນຕົວຂອງຄົນເຈັບ ເພື່ອປະເມີນຄວາມຕ້ອງການທາງດ້ານການເງິນ

Proprietary Information. Kaiser Permanente. All rights reserved.
Publication, duplication, disclosure or use for any purpose not expressly authorized in writing is prohibited.
**Printed copies are for reference only. Please see electronic copy for latest approved version.**

ໂດຍການນໍາໃຊ້ຮູບແບບທີ່ອີງໃສ່ຖານຂໍ້ມູນບັນທຶກສາທາລະນະ ທີ່ຈະປະເມີນຄົນເຈັບແຕ່ລະຄົນ ໂດຍອີງໃສ່ມາດຕະຖານດຽວກັນ
ເພື່ອຄິດໄລ່ຄະແນນຄວາມສາມາດທາງດ້ານການເງິນຂອງຄົນເຈັບ.

**ຄໍາແນະນໍາວ່າດ້ວຍຄວາມທຸກຍາກຂອງລັດຖະບານກາງ (FPG)** –
ລະດັບລາຍຮັບປະຈໍາປີສໍາລັບຄວາມທຸກຍາກ ຕາມການກໍານົດໂດຍ United States Department of Health and Human Services (ກະຊວງສາທາລະນະສຸກ ແລະ ການບໍລິການມະນຸດແຫ່ງສະຫະລັດອາເມລິກາ) ແລະ ມີການປັບປຸງໃໝ່ປະຈໍາປີຢູ່ໃນ ຫ້ອງການທະບຽນຂອງລັດຖະບານກາງ.

**ການໃຫ້ຄໍາປຶກສາທາງດ້ານການເງິນ** –
ຂະບວນການທີ່ນໍາມາໃຊ້ເພື່ອຊ່ວຍຄົນເຈັບໃນການສໍາຫຼວດທາງເລືອກດ້ານການເງິນ ແລະ ການຄຸ້ມຄອງສຸຂະພາບຕ່າງໆ ທີ່ມີຢູ່
ເພື່ອຈ່າຍຄ່າບໍລິການທີ່ໄດ້ຮັບຢູ່ໃນສະຖານພະຍາບານແຫ່ງຕ່າງໆຂອງ KP.
ບັນດາຄົນເຈັບທີ່ອາດຈະຊອກຫາການໃຫ້ຄໍາປຶກສາທາງດ້ານການເງິນ ແມ່ນລວມທັງ, ແຕ່ບໍ່ຈໍາກັດພຽງແຕ່, ການຈ່າຍດ້ວຍຕົນເອງ, ບໍ່ມີປະກັນໄພ, ມີປະກັນໄພມູນຄ່າຕໍ່າ ແລະ ຜູ້ທີ່ໄດ້ສະແດງໃຫ້ເຫັນວ່າບໍ່ມີຄວາມສາມາດໃນການຈ່າຍສ່ວນທີ່ເປັນຄວາມຮັບຜິດຊອບຂອງຄົນເຈັບໄດ້ຢ່າງເຕັມສ່ວນ.

**ບໍ່ມີທີ່ຢູ່ອາໄສ** – ຕົວລະບຸສະຖານະ ສໍາລັບສະຖານະການດໍາລົງຊີວິດຂອງບຸກຄົນ, ດັ່ງທີ່ອະທິບາຍໄວ້ຂ້າງລຸ່ມນີ້:

- ຢູ່ໃນສະຖານທີ່ທີ່ບໍ່ໄດ້ມີໄວ້ເພື່ອການຢູ່ອາໄສຂອງມະນຸດ ເຊັ່ນ: ລົດ, ສວນສາທາລະນະ, ແຄມທາງ,
ຕຶກອາຄານຮ້າງ (ຢູ່ເທິງຖະໜົນ).
- ຢູ່ໃນທີ່ພັກເຊົາສຸກເສີນ.
- ຢູ່ໃນທີ່ຢູ່ອາໄສໄລຍະຂ້າມຜ່ານ ຫຼື ອຸປະຖໍາ ສໍາລັບຄົນທີ່ບໍ່ມີທີ່ຢູ່ອາໄສ ທີ່ເດີມທີແລ້ວແມ່ນມາຈາກຂ້າງຖະໜົນ ຫຼື ທີ່ພັກເຊົາສຸກເສີນ.
- ຢູ່ໃນສະຖານທີ່ໃດໜຶ່ງຂ້າງເທິງນັ້ນ ແຕ່ໃຊ້ເວລາສັ້ນໆ (ເຖິງ 30 ວັນຕິດຕໍ່ກັນ) ໃນໂຮງໝໍ ຫຼື ສະຖາບັນອື່ນໆ.
- ກໍາລັງຈະຖືກຂັບໄລ່ອອກພາຍໃນໜຶ່ງອາທິດຈາກທີ່ພັກອາໄສເອກະຊົນ ຫຼື ກໍາລັງຫຼົບໜີຈາກສະຖານະການການໃຊ້ຄວາມຮຸນແຮງໃນຄອບຄົວ

Proprietary Information. Kaiser Permanente. All rights reserved.
Publication, duplication, disclosure or use for any purpose not expressly authorized in writing is prohibited.
**Printed copies are for reference only. Please see electronic copy for latest approved version.**

ທີ່ບໍ່ມີການລະບຸທີ່ຢູ່ອາໄສໃນພາຍຫຼັງ ແລະ ບຸກຄົນດັ່ງກ່າວຂາດແຄນແຫຼ່ງຊັບພະຍາກອນ ແລະ ເຄືອຂ່າຍການສະໜັບສະໜູນທີ່ຈໍາເປັນເພື່ອໃຫ້ໄດ້ຮັບທີ່ຢູ່ອາໄສ.

- ກໍາລັງຈະໄດ້ອອກຈາກສະຖາບັນໃດໜຶ່ງ ພາຍໃນອີກໜຶ່ງອາທິດ ເຊັ່ນ: ສະຖານບິ່ນປົວສຸຂະພາບຈິດ ຫຼື ສານເສບຕິດ ເຊິ່ງບຸກຄົນດັ່ງກ່າວໄດ້ເຂົ້າມາຢູ່ອາໄສຫຼາຍກວ່າ 30 ວັນຕິດຕໍ່ກັນ ແລະ ບໍ່ມີການລະບຸທີ່ຢູ່ອາໄສຫຼັງຈາກນັ້ນ ແລະ ບຸກຄົນທີ່ຂາດແຄນແຫຼ່ງຊັບພະຍາກອນທາງການເງິນ ແລະ ເຄືອຂ່າຍການສະໜັບສະໜູນທາງສັງຄົມທີ່ຈໍາເປັນ ເພື່ອໃຫ້ໄດ້ຮັບທີ່ຢູ່ອາໄສ.

**KP** – ປະກອບດ້ວຍ ໂຮງໝໍ Kaiser Foundation Hospitals ແລະ ບັນດາຄລີນິກໃນເຄືອຂອງໂຮງໝໍ, Kaiser Foundation Health Plans, Permanente Medical Groups ແລະ ບັນດາບໍລິສັດໃນເຄືອທີ່ກ່ຽວຂ້ອງຂອງເຂົາເຈົ້າ, ຍົກເວັ້ນບໍລິສັດ Kaiser Permanente Insurance Company (KPIC).

**ສະຖານບິ່ນປົວແຫ່ງຕ່າງໆຂອງ KP** – ສະຖານທີ່ທາງກາຍຍະພາບ, ລວມທັງພາຍໃນ ແລະ ພາຍນອກອາຄານ, ເປັນເຈົ້າຂອງ ຫຼື ເຊົ່າໂດຍ KP ໃນການດໍາເນີນທຸລະກິດຂອງ KP, ລວມທັງການໃຫ້ການເບິ່ງແຍງດູແລຄົນເຈັບ (ເຊັ່ນ: ອາຄານ ຫຼື ຊັ້ນ, ຫ້ອງ ຂອງ KP ຫຼື ພື້ນທີ່ພາຍໃນ ຫຼື ພາຍນອກອື່ນໆ ຂອງອາຄານທີ່ບໍ່ແມ່ນຂອງ KP).

**ຜ່ານການທົດສອບແບບສະເວ່ຍ** – ວິທີການໃນການນໍາ ແຫຼ່ງຂໍ້ມູນພາຍນອກ ຫຼື ຂໍ້ມູນທີ່ຄົນເຈັບໄດ້ສະໜອງໃຫ້ ມາໃຊ້ ເພື່ອກໍານົດການມີສິດໄດ້ຮັບໂຄງການຄຸ້ມຄອງຂອງລັດ ຫຼື MFA ໂດຍອີງໃສ່ວ່າລາຍຮັບຂອງຄົວເຮືອນຂອງບຸກຄົນນັ້ນ ຫຼາຍກວ່າຈໍານວນເປີເຊັນທີ່ໄດ້ລະບຸໄວ້ໃນຄໍາແນະນໍາວ່າດ້ວຍຄວາມທຸກຍາກຂອງລັດຖະບານກາງ ຫຼື ບໍ່.

**ການຊ່ວຍເຫຼືອດ້ານການເງິນທາງການແພດ (MFA)** – ໂຄງການທີ່ໃຫ້ລາງວັນຕ່າງໆ ເພື່ອນໍາໄປຈ່າຍຄ່າໃຊ້ຈ່າຍທາງການແພດ ສໍາລັບຄົນເຈັບທີ່ມີສິດໄດ້ຮັບ ທີ່ບໍ່ສາມາດຈ່າຍຄ່າບໍລິການ, ຜະລິດຕະພັນ ຫຼື ຢາທີ່ຈໍາເປັນທາງການແພດຂອງເຂົາເຈົ້າທັງໝົດ ຫຼື ບາງສ່ວນ ແລະ ຜູ້ທີ່ໃຊ້ແຫຼ່ງຊ່ວຍຈ່າຍເງິນຈາກລັດ ແລະ ເອກະຊົນຈົນໝົດແລ້ວ. ບຸກຄົນຕ່າງໆຕ້ອງບັນລຸໃຫ້ໄດ້ຕາມເກນຂອງໂຄງການ ສໍາລັບການຊ່ວຍເຫຼືອໃນການຈ່າຍຄ່າເບິ່ງແຍງດູແລຄົນເຈັບບາງສ່ວນ ຫຼື ທັງໝົດ.

Proprietary Information. Kaiser Permanente. All rights reserved.
Publication, duplication, disclosure or use for any purpose not expressly authorized in writing is prohibited.
**Printed copies are for reference only. Please see electronic copy for latest approved version.**

**ອຸປະກອນການແພດ** – ອຸປະກອນການແພດທີ່ບໍ່ສາມາດນຳມາໃຊ້ຄືນໃໝ່ໄດ້ ເຊັ່ນ: ເຝືອກຕໍ່ກະດູກ, ສາຍຫ້ອຍແຂນ, ຜ້າພັນແຜ ແລະ ຜ້າພັນບາດ ຜູ້ໃຫ້ບໍລິການເບິ່ງແຍງດູແລສຸຂະພາບທີ່ມີໃບອະນຸຍາດ ໄດ້ນຳໃຊ້ໃນຂະນະທີ່ໃຫ້ການບໍລິການທີ່ຈຳເປັນທາງການແພດ ແລະ ບໍ່ລວມອຸປະກອນທີ່ຄົນເຈັບຊື້ ຫຼື ໄດ້ຮັບມາຈາກແຫຼ່ງອື່ນ.

**ຄ່າໃຊ້ຈ່າຍຂອງຄົນເຈັບ** – ສ່ວນຂອງຄ່າບໍລິການທີ່ສົ່ງໃບຮຽກເກັບເງິນຈາກຄົນເຈັບ ສຳລັບການເບິ່ງແຍງດູແລທີ່ໄດ້ຮັບຢູ່ສະຖານທີ່ບໍລິການແຫ່ງຕ່າງໆຂອງ KP (ເຊັ່ນ: ໂຮງໝໍ, ຄລີນິກໃນເຄືອໂຮງໝໍ, ສູນການແພດ, ອາຄານຫ້ອງການການແພດ ແລະ ຮ້ານຂາຍຢາສຳລັບຄົນເຈັບນອກ) ທີ່ປະກັນໄພ ຫຼື ໂຄງການເບິ່ງແຍງດູແລສຸຂະພາບທີ່ໄດ້ຮັບທຶນຈາກພາກລັດ ບໍ່ຊົດເຊີຍຄືນໃຫ້.

**ການຍົກເວັ້ນຮ້ານຂາຍຢາ** – ໃຫ້ການຊ່ວຍເຫຼືອທາງດ້ານການເງິນແກ່ບັນດາສະມາຊິກ KP Senior Advantage Medicare ພາກ D ທີ່ມີລາຍໄດ້ຕ່ຳ ທີ່ບໍ່ສາມາດຈ່າຍສ່ວນແບ່ງຄ່າໃຊ້ຈ່າຍຂອງເຂົາເຈົ້າ ສຳລັບຢາຕາມໃບສັ່ງແພດສຳລັບຄົນເຈັບນອກ ທີ່ໄດ້ຮັບການຄຸ້ມຄອງພາຍໃຕ້ Medicare ພາກ D.

**ຕາຂ່າຍຄວາມປອດໄພ** – ລະບົບຂອງອົງກອນບໍ່ຫວັງຜົນກຳໄລ ແລະ/ຫຼື ໜ່ວຍງານຂອງລັດຖະບານ ທີ່ໃຫ້ການບໍລິການເບິ່ງແຍງດູແລທາງການແພດໂດຍກົງແກ່ຜູ້ບໍ່ມີປະກັນໄພ ຫຼື ດ້ອຍໂອກາດໃນສະຖານທີ່ຊຸມຊົນ ເຊັ່ນ: ໂຮງໝໍລັດ, ຄລີນິກຊຸມຊົນ, ໂບດ, ທີ່ພັກອາໄສສຳລັບຄົນບໍ່ມີທີ່ຢູ່ອາໄສ, ໜ່ວຍສາທາລະນະສຸກເຄື່ອນທີ່, ໂຮງຮຽນ ແລະ ອື່ນໆ.

**ມີປະກັນໄພມູນຄ່າຕ່ຳ** – ບຸກຄົນຜູ້ທີ່ ເຖິງແມ່ນວ່າຈະມີການຄຸ້ມຄອງການເບິ່ງແຍງດູແລສຸຂະພາບກໍຕາມ, ແຕ່ພົບວ່າພັນທະໃນການຈ່າຍເບ້ຍປະກັນໄພ, ການຈ່າຍຮ່ວມ, ການປະກັນໄພຮ່ວມ ແລະ ຈຳນວນທີ່ເປັນຄວາມຮັບຜິດຊອບສ່ວນທຳອິດ ແມ່ນເປັນພາລະທາງດ້ານການເງິນທີ່ສຳຄັນ ທີ່ເຮັດໃຫ້ຄົນເຈັບໄດ້ຮັບການບໍລິການເບິ່ງແຍງດູແລສຸຂະພາບທີ່ຈຳເປັນລ່າຊ້າ ຫຼື ບໍ່ໄດ້ຮັບ ເນື່ອງຈາກຄ່າໃຊ້ຈ່າຍທີ່ຕ້ອງໄດ້ຈ່າຍເອງ.

**ບໍ່ມີປະກັນໄພ** – ບຸກຄົນທີ່ບໍ່ມີປະກັນສຸຂະພາບ ຫຼື ການຊ່ວຍເຫຼືອດ້ານການເງິນທີ່ໄດ້ຮັບການສະໜັບສະໜູນຈາກລັດຖະບານກາງ ຫຼື ລັດ ເພື່ອຊ່ວຍຈ່າຍຄ່າບໍລິການເບິ່ງແຍງດູແລສຸຂະພາບ.

Proprietary Information. Kaiser Permanente. All rights reserved.
Publication, duplication, disclosure or use for any purpose not expressly authorized in writing is prohibited.
**Printed copies are for reference only. Please see electronic copy for latest approved version.**

**ປະຊາກອນທີ່ມີຄວາມບອບບາງ** – ກຸ່ມປະຊາກອນທີ່ໄດ້ຮັບການພິຈາລະນາວ່າສຸຂະພາບ ແລະ ຄວາມສະຫວັດດີພາບຂອງຕົນ ມີຄວາມສ່ຽງຫຼາຍກ່ວາປະຊາກອນທົ່ວໄປ ເນື່ອງຈາກສະຖານະທາງດ້ານເສດຖະກິດ-ສັງຄົມ, ການເຈັບປ່ວຍ, ຊົນເຜົ່າ, ອາຍຸ ຫຼື ປັດໄຈພິການອື່ນໆ.

**ໝາຍພາຕົວ** – ຂະບວນການທີ່ລິເລີ່ມຂຶ້ນໂດຍສານ ທີ່ສັ່ງໃຫ້ເຈົ້າໜ້າທີ່ນໍາຕົວຜູ້ທີ່ພົບເຫັນວ່າມີການຂັດຄໍາສັ່ງສານ ເຂົ້າມາຫາສານ, ຄ້າຍຄືກັນກັບໝາຍຈັບ.

**ພາກພະໜອກ:** **Kaiser Permanente ພາກໃຕ້ California**

**ວັນທີທີ່ພາກພະໜອກມີຜົນບັງຄັບໃຊ້:** **1 ມັງກອນ 2024**

**I. ໂຮງໝໍ Kaiser Foundation Hospitals.**

ນະໂຍບາຍນີ້ມີຜົນບັງຄັບໃຊ້ກັບບັນດາສະຖານປິ່ນປົວທັງໝົດຂອງ KFHP/H (ເຊັ່ນ: ໂຮງໝໍ, ຄລີນິກໃນເຄືອຂອງໂຮງໝໍ, ສູນການແພດ ແລະ ອາຄານຫ້ອງການການແພດ) ແລະ ຮ້ານຂາຍຢາສໍາລັບຄົນເຈັບນອກ. ໂຮງໝໍ Kaiser Foundation Hospitals ໃນພາກໃຕ້ California ປະກອບມີ:

| | |
|---|---|
| KFH Anaheim | KFH Moreno Valley |
| KFH Irvine | KFH San Diego |
| KFH Baldwin Park | KFH West Los Angeles |
| KFH Fontana | KFH Woodland Hills |

Proprietary Information. Kaiser Permanente. All rights reserved.
Publication, duplication, disclosure or use for any purpose not expressly authorized in writing is prohibited.
**Printed copies are for reference only. Please see electronic copy for latest approved version.**

KFH South Bay
KFH Los Angeles
KFH Panorama
KFH Riverside
KFH Downey
KFH Ontario
KFH Zion
KFH San Marcos

ໝາຍເຫດ: ໂຮງໝໍ Kaiser Foundation Hospitals ປະຕິບັດຕາມນະໂຍບາຍວ່າດ້ວຍການກຳນົດລາຄາໂຮງໝໍແບບຍຸຕິທຳ, ປະມວນກົດໝາຍວ່າດ້ວຍ ສຸຂະພາບ ແລະ ຄວາມປອດໄພແຫ່ງລັດຄາລິຟໍເນຍ §127400.

ນອກຈາກນັ້ນແລ້ວ, ກົດໝາຍກໍຍັງກຳນົດໃຫ້ແພດສຸກເສີນທີ່ໃຫ້ບໍລິການທາງການແພດສຸກເສີນຢູ່ໃນໂຮງໝໍ Kaiser Foundation Hospitals ໃນພາກໃຕ້ California ໃຫ້ສ່ວນຫຼຸດແກ່ຄົນເຈັບທີ່ບໍ່ມີປະກັນໄພ ຫຼື ຄົນເຈັບທີ່ມີຄ່າໃຊ້ຈ່າຍທາງການແພດສູງ ທີ່ຢູ່ໃນລະດັບ ຫຼື ຕໍ່າກວ່າ 400% ຂອງລະດັບຄວາມທຸກຍາກຂອງລັດຖະບານກາງ.

## II. ການບໍລິການເພີ່ມຕື່ມ ທີ່ມີສິດໄດ້ຮັບ ແລະ ບໍ່ມີສິດໄດ້ຮັບ ພາຍໃຕ້ນະໂຍບາຍ MFA

### a. ການບໍລິການທີ່ມີສິດໄດ້ຮັບເພີ່ມຕື່ມ

i. **ການຂົນສົ່ງຄົນເຈັບທີ່ບໍ່ມີທີ່ຢູ່ອາໄສ.** ມີໃຫ້ແກ່ຄົນເຈັບທີ່ບໍ່ມີບ້ານສຳລັບສະຖານະການສຸກເສີນ ແລະ ບໍ່ສຸກເສີນ ເພື່ອອຳນວຍຄວາມສະດວກໃນການອອກຈາກໂຮງໝໍຂອງ KP ຫຼື ພະແນກສຸກເສີນຂອງ KP.

### b. ການບໍລິການທີ່ບໍ່ມີສິດໄດ້ຮັບເພີ່ມຕື່ມ.

i. ເຄື່ອງຊ່ວຍຟັງ

ii. ອຸປະກອນດ້ານສາຍຕາ

Proprietary Information. Kaiser Permanente. All rights reserved.
Publication, duplication, disclosure or use for any purpose not expressly authorized in writing is prohibited.
**Printed copies are for reference only. Please see electronic copy for latest approved version.**

**III.** **ບັນດາຜູ້ໃຫ້ບໍລິການຂຶ້ນກັບ ແລະ ບໍ່ຂຶ້ນກັບ ນະໂຍບາຍ MFA.** ລາຍຊື່ຜູ້ໃຫ້ບໍລິການຢູ່ໃນໂຮງໝໍ Kaiser Foundation Hospitals ທີ່ຂຶ້ນກັບແລະ ບໍ່ຂຶ້ນກັບນະໂຍບາຍ MFA ແມ່ນມີໃຫ້ສາທາລະນະຊົນທົ່ວໄປ ໂດຍບໍ່ໄດ້ເສຍຄ່າໃຊ້ຈ່າຍ ຢູ່ໃນເວັບໄຊ MFA ຂອງ KFHP/H ທີ່ www.kp.org/mfa/scal (ເປັນພາສາອັງກິດ).

**IV.** **ຂໍ້ມູນກ່ຽວກັບໂຄງການ ແລະ ການຍື່ນຄໍາຮ້ອງຂໍ MFA.** ຂໍ້ມູນກ່ຽວກັບໂຄງການ MFA ປະກອບມີ ສໍາເນົາຂອງນະໂຍບາຍ MFA, ແບບຟອມສະໝັກ, ຄໍາແນະນໍາ ແລະ ບົດສັງລວມຫຍໍ້ດ້ວຍພາສາທີ່ເຂົ້າໃຈງ່າຍ (ເຊັ່ນ: ໃບປິວກ່ຽວກັບໂຄງການ) ແມ່ນມີໃຫ້ແກ່ສາທາລະນະຊົນທົ່ວໄປ ໂດຍບໍ່ເສຍຄ່າໃຊ້ຈ່າຍ ໃນຮູບແບບເອເລັກໂຕນິກ ຫຼື ເອກະສານ. ຄົນເຈັບສາມາດຍື່ນຄໍາຮ້ອງຂໍໂຄງການ MFA, ໃນໄລຍະ ຫຼື ຫຼັງຈາກໄດ້ຮັບການດູແລຈາກ KFHP/H ໃນຫຼາຍຊ່ອງທາງ ລວມທັງອອນລາຍ, ແບບເຊິ່ງໜ້າ, ທາງໂທລະສັບ ຫຼື ຜ່ານທາງເອກະສານຟອມສະໝັກ. (ເບິ່ງຂໍ້ 5.3 ແລະ 5.4 ຂອງນະໂຍບາຍ.)

a. **ຕື່ມຂໍ້ມູນໃສ່ໃບສະໝັກທາງອອນລາຍໃຫ້ຄົບຖ້ວນ ແລະ ສົ່ງໄປໃນເວັບໄຊຂອງ KFHP/H.** ຄົນເຈັບສາມາດເລີ່ມ ແລະ ສົ່ງຂໍ້ມູນຄໍາຮ້ອງຂໍສະໝັກໄດ້ທາງເອເລັກໂຕນິກໃນເວັບໄຊຂອງ MFA ໄດ້ທີ່ www.kp.org/mfa/scal (ເປັນພາສາອັງກິດ).

b. **ດາວໂຫຼດຂໍ້ມູນກ່ຽວກັບໂຄງການຈາກເວັບໄຊຂອງ KFHP/H.** ສໍາເນົາເອເລັກໂຕນິກຂອງຂໍ້ມູນກ່ຽວກັບໂຄງການແມ່ນມີຢູ່ໃນເວັບໄຊຂອງ MFA ທີ່ www.kp.org/mfa/scal (ເປັນພາສາອັງກິດ).

c. **ຮ້ອງຂໍຂໍ້ມູນໂຄງການທາງເອເລັກໂຕນິກ.** ສໍາເນົາເອເລັກໂຕນິກຂອງຂໍ້ມູນກ່ຽວກັບໂຄງການແມ່ນມີໃຫ້ທາງອີເມວ ຕາມການຮ້ອງຂໍ ທີ່ CSS-MFA-DEPARTMENT@KP.org.

d. **ຮັບຂໍ້ມູນກ່ຽວກັບໂຄງການ ຫຼື ຍື່ນຄໍາຮ້ອງຂໍແບບເຊິ່ງໜ້າ.** ຂໍ້ມູນກ່ຽວກັບໂຄງການແມ່ນມີໃຫ້ຢູ່ທີ່ພະແນກຮັບຕ້ອນຮັບຄົນເຈັບທີ່ເຂົ້ານອນໂຮງໝໍ ແລະ ຫ້ອງສຸກເສີນໃນ

Proprietary Information. Kaiser Permanente. All rights reserved.
Publication, duplication, disclosure or use for any purpose not expressly authorized in writing is prohibited.
**Printed copies are for reference only. Please see electronic copy for latest approved version.**

Kaiser Foundation Hospitals ທີ່ລະບຸໄວ້ໃນຂໍ້ I, *Kaiser Foundation Hospitals*.

e. **ຮ້ອງຂໍຂໍ້ມູນກ່ຽວກັບໂຄງການ ຫຼື ຍື່ນຄຳຮ້ອງຂໍທາງໂທລະສັບ.** ບັນດາທີ່ປຶກສາແມ່ນມີໃຫ້ທາງໂທລະສັບ ເພື່ອໃຫ້ຂໍ້ມູນ, ກຳນົດການມີສິດໄດ້ຮັບ MFA ແລະ ຊ່ວຍເຫຼືອຄົນເຈັບໃນການຍື່ນຄຳຮ້ອງຂໍ MFA. ທ່ານສາມາດຕິດຕໍ່ບັນດາທີ່ປຶກສາໄດ້ທີ່:

ເບີໂທລະສັບ: 1-800-390-3507

f. **ຮ້ອງຂໍຂໍ້ມູນກ່ຽວກັບໂຄງການ ຫຼື ຍື່ນຄຳຮ້ອງຂໍທາງໄປສະນີ.** ຄົນເຈັບສາມາດຮ້ອງຂໍຂໍ້ມູນກ່ຽວກັບໂຄງການ ແລະ ສະໝັກຂໍ MFA ໄດ້ໂດຍການສົ່ງຄຳຮ້ອງຂໍສະໝັກໂຄງການ MFA ສະບັບເຕັມທາງໄປສະນີ. ຄຳຮ້ອງຂໍຂໍ້ມູນ ແລະ ຄຳຮ້ອງຂໍສະໝັກ ແມ່ນສາມາດສົ່ງທາງໄປສະນີ ໄປຍັງ:

Kaiser Permanente
Attention: Medical Financial Assistance
P.O. Box 7086
Pasadena, CA 91109-7086

g. **ສົ່ງໃບຄຳຮ້ອງຂໍສະໝັກທີ່ຕື່ມຂໍ້ມູນຄົບຖ້ວນແລ້ວແບບເຊິ່ງໜ້າ.** ໃບຄຳຮ້ອງຂໍສະໝັກທີ່ຕື່ມຂໍ້ມູນຄົບຖ້ວນແລ້ວແມ່ນສາມາດສົ່ງແບບເຊິ່ງໜ້າໄດ້ໄປຫາພະແນກຮັບຮັບຄົນເຈັບໃນແຕ່ລະແຫ່ງຂອງ Kaiser Foundation Hospital.

**V. ເກນການມີສິດໄດ້ຮັບ.** ລາຍຮັບຄົວເຮືອນຂອງຄົນເຈັບ ຈະຖືກນຳມາພິຈາລະນາໃນເວລາກຳນົດການມີສິດໄດ້ຮັບ MFA. (ເບິ່ງຂໍ້ 5.6.1 ຂອງນະໂຍບາຍ.)

a. ເກນການທົດສອບແບບສະເລ່ຍ: ສູງເຖິງ 400% ຂອງຄຳແນະນຳວ່າດ້ວຍຄວາມທຸກຍາກຂອງລັດຖະບານກາງ.

**VI. ຕາຕະລາງສ່ວນຫຼຸດ.** ຈຳນວນເງິນທີ່ KP ຮຽກເກັບຈາກຄົນເຈັບທີ່ມີເງື່ອນໄຂໄດ້ຮັບການຊ່ວຍເຫຼືອດ້ານການເງິນທາງການແ

Proprietary Information. Kaiser Permanente. All rights reserved.
Publication, duplication, disclosure or use for any purpose not expressly authorized in writing is prohibited.
**Printed copies are for reference only. Please see electronic copy for latest approved version.**

ພດ ແມ່ນອີງໃສ່ປະເພດເກນການມີສິດໄດ້ຮັບ ທີ່ນຳມາໃຊ້ເພື່ອໃຫ້ຄົນເຈັບມີເງື່ອນໄຂໄດ້ຮັບໂຄງການ.

a. **ຄົນເຈັບບັນລຸໄດ້ຕາມເກນການທົດສອບແບບສະເລ່ຍ.** ຄົນເຈັບທີ່ບັນລຸໄດ້ຕາມເກນການທົດສອບແບບສະເລ່ຍຈະໄດ້ຮັບສ່ວນຫຼຸດແບບເລື່ອນລະດັບຕໍ່ຄ່າໃຊ້ຈ່າຍຂອງຄົນເຈັບ ຫຼື ສ່ວນຂອງຄ່າບໍລິການສຳລັບການບໍລິການຂອງ KP ທີ່ຄົນເຈັບເປັນຜູ້ຮັບຜິດຊອບ. ຈຳນວນສ່ວນຫຼຸດ ແມ່ນຖືກກຳນົດໂດຍອີງໃສ່ວ່າລາຍຮັບຄົວເຮືອນຂອງຄົນເຈັບຕົກຢູ່ຈຸດໃດໃນຄຳແນະນຳວ່າດ້ວຍລະດັບຄວາມທຸກຍາກຂອງລັດຖະບານກາງ (FPL) ດັ່ງຕໍ່ໄປນີ້:

| **ຄຳແນະນຳວ່າດ້ວຍລະດັບຄວາມທຸກຍາກຂອງລັດຖະບານກາງ** | | **ສ່ວນຫຼຸດການຊ່ວຍເຫຼືອທາງດ້ານການເງິນ** |
|---|---|---|
| **ຈາກ** | **ຫາ** | |
| 0% - 200% | | ສ່ວນຫຼຸດ 100% |
| 201% - 400% | | ສ່ວນຫຼຸດ 50% |

ຖ້າໄດ້ຮັບສ່ວນຫຼຸດບາງສ່ວນ (ໜ້ອຍກວ່າ 100%), ຍອດທີ່ຍັງເຫຼືອແມ່ນຈຳເປັນຕ້ອງໄດ້ຈ່າຍເຕັມຈຳນວນ ຫຼື ຄົນເຈັບສາມາດເລືອກທີ່ຈະຕັ້ງແຜນຈ່າຍເງິນທີ່ບໍ່ມີດອກເບ້ຍໄດ້.

**VII. ພື້ນຖານສຳລັບການຄິດໄລ່ມູນຄ່າທີ່ຖືກຮຽກເກັບໃນໃບບິນທົ່ວໄປ (AGB).** KFHP/H ກຳນົດ AGB ສຳລັບທຸກກໍລະນີສຸກເສີນ ຫຼື ການເບິ່ງແຍງດູແລທີ່ຈຳເປັນທາງການແພດອື່ນໆ ທີ່ນຳໃຊ້ວິທີເບິ່ງຄືນ ໂດຍການຄູນຄ່າໃຊ້ຈ່າຍລວມໃນການເບິ່ງແຍງດູແລກັບອັດຕາ AGB. ຂໍ້ມູນກ່ຽວກັບອັດຕາ AGB ແລະ ການຄິດໄລ່ສາມາດເບິ່ງໄດ້ໃນເວັບໄຊ MFA ຂອງ KFHP/H ທີ່ www.kp.org/mfa/scal (ເປັນພາສາອັງກິດ).

**VIII. ການຄືນເງິນ.** ໃນກໍລະນີທີ່ KP ໄດ້ຮຽກເກັບເງິນດ້ວຍຄວາມຜິດພາດຈາກລູກຄ້າໃນໄລຍະທີ່ລາງວັນຂອງ MFA ທີ່ກຳລັງມີຜົນບັງຄັບໃຊ້ຂອງພວກເຂົາ,

Proprietary Information. Kaiser Permanente. All rights reserved.
Publication, duplication, disclosure or use for any purpose not expressly authorized in writing is prohibited.
**Printed copies are for reference only. Please see electronic copy for latest approved version.**

ການຄືນເງິນຈະເລີ່ມຕົ້ນຈາກມູນຄ່າໃດກໍຕາມທີ່ຄົນເຈັບໄດ້ຈ່າຍໄປທີ່ຄວນຈະໄດ້ຮັບການຄຸ້ມຄອງຈາກລາງວັນຂອງ MFA ທີ່ກຳລັງມີຜົນບັງຄັບໃຊ້.

a. ດອກເບ້ຍຈະເພີ່ມຂຶ້ນຕາມອັດຕາທີ່ກຳນົດໄວ້ໃນມາດຕາ 685.010 ຂອງປະມວນກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ; ໂດຍເລີ່ມຕົ້ນຈາກວັນທີໂຮງໝໍໄດ້ຮັບການຊຳລະເງິນຈາກຄົນເຈັບ. ອັດຕາໃນປັດຈຸບັນແມ່ນ 10%.

## IX. ແຈ້ງການຕ່າງໆ.

### a. ຊ່ວຍຈ່າຍຄ່າໃບບິນຂອງທ່ານ

ມີອົງການຈັດຕັ້ງຊ່ວຍເຫຼືອຜູ້ບໍລິໂພກແບບບໍ່ເສຍຄ່າທີ່ຈະຊ່ວຍໃຫ້ທ່ານເຂົ້າໃຈຂັ້ນຕອນການຮຽກເກັບເງິນ ແລະ ການຈ່າຍເງິນ. ທ່ານສາມາດຈະໂທຫາ Health Consumer Alliance ໄດ້ທີ່ເບີ 888-804-3536 ຫຼື ໄປທີ່ healthconsumer.org ສຳລັບຂໍ້ມູນເພີ່ມຕື່ມ.

### b. Hospital Bill Complaint Program (ໂຄງການການຮ້ອງຮຽນກ່ຽວກັບໃບບິນຮຽກເກັບເງິນຂອງໂຮງໝໍ)

ໂຄງການການຮ້ອງຮຽນກ່ຽວກັບໃບບິນຮຽກເກັບເງິນຂອງໂຮງໝໍ ແມ່ນໂຄງການຂອງລັດ, ເຊິ່ງຈະກວດສອບຄຳຕັດສິນຂອງໂຮງໝໍກ່ຽວກັບວ່າ ທ່ານມີເງື່ອນໄຂໄດ້ຮັບການຊ່ວຍເຫຼືອຈ່າຍໃບບິນຮຽກເກັບເງິນຂອງໂຮງໝໍຂອງທ່ານ ຫຼື ບໍ່. ຖ້າທ່ານເຊື່ອວ່າ ທ່ານຖືກປະຕິເສດການຊ່ວຍເຫຼືອທາງດ້ານການເງິນດ້ວຍຄວາມຜິດພາດ, ທ່ານສາມາດຍື່ນຄຳຮ້ອງຮຽນກັບໂຄງການການຮ້ອງຮຽນກ່ຽວກັບໃບບິນຮຽກເກັບເງິນຂອງໂຮງໝໍໄດ້. ໄປທີ່ HospitalBillComplaint.hcai.ca.gov ສຳລັບຂໍ້ມູນເພີ່ມຕື່ມ ແລະ ເພື່ອຍື່ນຄຳຮ້ອງຮຽນ.

### c. ຂໍ້ຄວນໃສ່ໃຈ: ການຊ່ວຍເຫຼືອດ້ານພາສາ

ຖ້າທ່ານຕ້ອງການຄວາມຊ່ວຍເຫຼືອເປັນພາສາຂອງທ່ານ, ກະລຸນາໂທຫາເບີ 1-800-464-4000 (TTY 711). ການຊ່ວຍເຫຼືອແມ່ນມີໃຫ້ 24 ຊົ່ວໂມງຕໍ່ວັນ

Proprietary Information. Kaiser Permanente. All rights reserved.
Publication, duplication, disclosure or use for any purpose not expressly authorized in writing is prohibited.
**Printed copies are for reference only. Please see electronic copy for latest approved version.**

ເຈັດວັນຕໍ່ອາທິດ, ຍົກເວັ້ນວັນພັກຕ່າງໆ. ການຊ່ວຍເຫຼືອ ແລະ ການບໍລິການຕ່າງໆ ສໍາລັບຄົນພິການ ເຊັ່ນ: ເອກະສານທີ່ເປັນຕົວອັກສອນນູນ, ການພິມເປັນຕົວໃຫຍ່, ບັນທຶກສຽງ ແລະ ຮູບແບບເອເລັກໂຕນິກອື່ນໆ ທີ່ສາມາດເຂົ້າໃຊ້ໄດ້ ກໍ່ມີໃຫ້ອີກດ້ວຍ. ການບໍລິການເຫຼົ່ານີ້ແມ່ນບໍ່ເສຍຄ່າ.

Proprietary Information. Kaiser Permanente. All rights reserved.
Publication, duplication, disclosure or use for any purpose not expressly authorized in writing is prohibited.
**Printed copies are for reference only. Please see electronic copy for latest approved version.**